ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**(ຮ່າງ)**

# ຂໍ້ຕົກລົງ
# ວ່າດ້ວຍ ຖິ່ນກຳເນີດ

## ສາລະບານ


**ໝວດທີ 1** ...... 3

**ບົດບັນຍັດທົ່ວໄປ** ...... 3

ມາດຕາ 1. ຈຸດປະສົງ...... 3
ມາດຕາ 2. ຖິ່ນກຳເນີດ ...... 3
ມາດຕາ 3. ການອະທິບາຍຄຳສັບ ...... 3
ມາດຕາ 4. ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ມີສິດໄດ້ຮັບການປົກປ້ອງ ...... 5

**ໝວດທີ 2** ...... 5

**ເງື່ອນໄຂຂອງຜະລິດຕະພັນ ແລະ ການເປັນຜູ້ຮ້ອງຂໍຈົດທະບຽນຖິ່ນກຳເນີດ**...... 5

ມາດຕາ 5 ຜະລິດຕະພັນທີ່ສາມາດໄດ້ຮັບໃບຢັ້ງຢືນການຈົດທະບຽນຖິ່ນກຳເນີດ ...... 5
ມາດຕາ 6 ເງື່ອນໄຂຂອງການເປັນຜູ້ຮ້ອງຂໍ ...... 5

**ໝວດທີ 3** ...... 5

**ການຈົດທະບຽນຖິ່ນກຳເນີດ**...... 5

ມາດຕາ 7 ຂັ້ນຕອນການຈົດທະບຽນຖິ່ນກຳເນີດ ...... 5
ມາດຕາ 8 ຂັ້ນຕອນການຍື່ນຄຳຮ້ອງ...... 6
ມາດຕາ 9 ສຳນວນຄຳຮ້ອງຂໍຈົດທະບຽນຖິ່ນກຳເນີດ ...... 6
ມາດຕາ 10 ສຳນວນເອກະສານກ່ຽວກັບຄຸນລັກສະນະສິນຄ້າຖິ່ນກຳເນີດ ...... 6
ມາດຕາ 11 ເງື່ອນໄຂຕໍ່າສຸດໃນການໄດ້ຮັບວັນທີຍື່ນຄຳຮ້ອງ ...... 7
ມາດຕາ 12 ການກວດສອບເບື້ອງຕົ້ນ ...... 7
ມາດຕາ 13 ການເຜີຍແຜ່ຄຳຮ້ອງ ...... 7
ມາດຕາ 14 ຂັ້ນຕອນການຄັດຄ້ານຄຳຮ້ອງ ...... 8
ມາດຕາ 15 ຂັ້ນຕອນພິຈາລະນາການຄັດຄ້ານຄຳຮ້ອງ ...... 8
ມາດຕາ 16 ການກວດສອບເນື້ອໃນ...... 9
ມາດຕາ 17 ການດັດແກ້ໃນໄລຍະການກວດສອບ ...... 9
ມາດຕາ 18 ການຈົດທະບຽນ ແລະ ການເຜີຍແຜ່ຜົນຂອງການຈົດທະບຽນ ......10

**ໝວດທີ 4** ......10

**ອາຍຸການປົກປ້ອງ ແລະ ການດຳເນີນການອື່ນ** ......10

**ຫຼັງການຈົດທະບຽນຖິ່ນກຳເນີດ** ......10

ມາດຕາ 19 ອາຍຸການປົກປ້ອງ......10
ມາດຕາ 20 ການປ່ຽນຊື່ ແລະ/ຫຼື ທີ່ຢູ່......10
ມາດຕາ 21 ການສຳເນົາໃບຢັ້ງຢືນການຈົດທະບຽນຖິ່ນກຳເນີດ ......10
ມາດຕາ 22 ການດັດແກ້ພາຍຫຼັງການຈົດທະບຽນ ......10
ມາດຕາ 23 ສິດພາຍຫຼັງການຈົດທະບຽນຖິ່ນກຳເນີດ......11
ມາດຕາ 24 ການຍົກເລີກການຈົດທະບຽນຖິ່ນກຳເນີດ ......11

**ໝວດທີ 5** ......12

**ກາໝາຍຖິ່ນກຳເນີດແຫ່ງຊາດ**.....12
ມາດຕາ 25 ກາໝາຍຖິ່ນກຳເນີດແຫ່ງຊາດ .....12
ມາດຕາ 26 ການນຳໃຊ້ກາໝາຍຖິ່ນກຳເນີດແຫ່ງຊາດ .....12
ມາດຕາ 27 ຜູ້ນຳໃຊ້ກາໝາຍຖິ່ນກຳເນີດແຫ່ງຊາດ .....12
ມາດຕາ 28 ການຄຸ້ມຄອງກາໝາຍຖິ່ນກຳເນີດແຫ່ງຊາດ.....13
ມາດຕາ 29 ອາຍຸການນຳໃຊ້ກາໝາຍຖິ່ນກຳເນີດແຫ່ງຊາດ .....13
**ໝວດທີ 6** .....13
**ສະມາຄົມສົ່ງເສີມສິນຄ້າຖິ່ນກຳເນີດ ແລະ ອົງການກວດສອບຄຸນລັກສະນະຖິ່ນກຳເນີດ**.....13
ມາດຕາ 30 ສິດ ແລະ ໜ້າທີ່ຂອງສະມາຄົມສົ່ງເສີມສິນຄ້າຖິ່ນກຳເນີດ .....13
ມາດຕາ 31 ໜ່ວຍງານກວດສອບຄຸນລັກສະນະສິນຄ້າຖິ່ນກຳເນີດ .....14
**ໝວດທີ 7** .....15
**ການເປັນຜູ້ຕາງໜ້າໃນການຈົດທະບຽນຖິ່ນກຳເນີດ ແລະ ດຳເນີນການອື່ນໆ** .....15
ມາດຕາ 32 ບຸກຄົນທີ່ມີສິດເປັນຜູ້ຕາງໜ້າໃນການຈົດທະບຽນຖິ່ນກຳເນີດ ແລະ ດຳເນີນການອື່ນໆ .....15
ມາດຕາ 33 ການແຕ່ງຕັ້ງຜູ້ຕາງໜ້າ .....16
ມາດຕາ 34 ການມອບສິດ .....16
ມາດຕາ 35 ການສິ້ນສຸດການເປັນຜູ້ຕາງໜ້າ.....16
**ໝວດທີ 8** .....16
**ການທົບທວນຄືນທາງດ້ານບໍລິຫານກ່ຽວກັບການຈົດທະບຽນຖິ່ນກຳເນີດ** .....16
ມາດຕາ 36 ການທົບທວນຄືນ ແລະ ການແກ້ໄຂ ຂໍ້ຜິດພາດ .....16
ມາດຕາ 37 ການທົບທວນຄືນດ້ານບໍລິຫານ .....17
ມາດຕາ 38 ການສະເໜີໃຫ້ຢຸດຊົ່ວຄາວ.....17
ມາດຕາ 39 ການພິຈາລະນາຄືນໃໝ່.....17
ມາດຕາ 40 ການຂໍອຸທອນ .....17
ມາດຕາ 41 ຄະນະກຳມະການອຸທອນ.....18
ມາດຕາ 42 ສຳນວນເອກະສານ ຫຼື ເອກະສານທີ່ຊອກບໍ່ເຫັນ .....18
**ໝວດທີ 9** .....19
**ອົງການຄຸ້ມຄອງວຽກງານຖິ່ນກຳເນີດ** .....19
ມາດຕາ 43 ອົງການຄຸ້ມຄອງ.....19
ມາດຕາ 44 ສິດ ແລະ ໜ້າທີ່ຂອງກົມຊັບສິນທາງປັນຍາ .....19
ມາດຕາ 45 ສິດ ແລະ ໜ້າທີ່ຂອງພະແນກວິທະຍາສາດ ແລະ ເຕັກໂນໂລຊີແຂວງ, ນະຄອນຫຼວງ .....19
**ໝວດທີ 10** .....20
**ບົດບັນຍັດສຸດທ້າຍ** .....20
ມາດຕາ 46 ການຈັດຕັ້ງປະຕິບັດ .....20
ມາດຕາ 47 ຜົນສັກສິດ .....20

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ເລກທີ................/ກວຕ
ນະຄອນຫຼວງວຽງຈັນ, ວັນທີ

(ຮ່າງ)

# ຂໍ້ຕົກລົງ
## ວ່າດ້ວຍ ຖິ່ນກຳເນີດ

- ອີງຕາມກົດໝາຍວ່າດ້ວຍຊັບສິນທາງປັນຍາ (ສະບັບປັບປຸງ) ສະບັບເລກທີ 38/ສພຊ, ລົງວັນທີ 15 ພະຈິກ 2017;
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງການເຄື່ອນໄຫວຂອງ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ, ສະບັບເລກທີ 314/ນຍ, ລົງວັນທີ 29 ກັນຍາ 2017;
- ອີງຕາມການຄົ້ນຄວ້າສະເໜີ ຂອງກົມຊັບສິນທາງປັນຍາ, ສະບັບເລກທີ......./ກຊປ,ລົງວັນທີ...

## ລັດຖະມົນຕີ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກຳນົດລະບຽບການກ່ຽວກັບຖິ່ນກຳເນີດ, ຂັ້ນຕອນການຈົດທະບຽນຖິ່ນກຳເນີດ, ການດຳເນີນການອື່ນຫຼັງການຈົດທະບຽນ, ກາໝາຍຖິ່ນກຳເນີດແຫ່ງຊາດ, ສະມາຄົມສົ່ງເສີມສິນຄ້າຖິ່ນກຳເນີດ ແລະ ໜ່ວຍງານກວດສອບຄຸນລັກສະນະຖິ່ນກຳເນີດ, ການເປັນຜູ້ຕາງໜ້າ, ການທົບທວນຄືນທາງດ້ານບໍລິຫານ ແລະ ອີງການຄຸ້ມຄອງວຽກງານຖິ່ນກຳເນີດ ເພື່ອແນໃສ່ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍຊັບສິນທາງປັນຍາກ່ຽວກັບ ຖິ່ນກຳເນີດ ໃຫ້ເປັນເອກະພາບໃນຂອບເຂດທົ່ວປະເທດ.

**ມາດຕາ 2. ຖິ່ນກຳເນີດ**

ຖິ່ນກຳເນີດ ແມ່ນສັນຍາລັກທີ່ບົ່ງບອກທີ່ມາຂອງສິນຄ້າຈາກດິນແດນ, ເຂດ ຫຼື ທ້ອງຖິ່ນຂອງປະເທດໃດໜຶ່ງຊຶ່ງເປັນສິ່ງສຳຄັນພາໃຫ້ສິນຄ້າມີຄຸນນະພາບ ແລະ ມີຊື່ສຽງ ຫຼື ຄຸນລັກສະນະອື່ນທີ່ຕິດພັນກັບພູມສາດ.

**ມາດຕາ 3. ການອະທິບາຍຄຳສັບ**

ຄຳສັບທີ່ໃຊ້ຢູ່ໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍດັ່ງນີ້:

1. **ຜູ້ດຳເນີນການ** ໝາຍເຖິງ ນິຕິບຸກຄົນ ແລະ ການຈັດຕັ້ງໃດໜຶ່ງທີ່ມີສ່ວນຮ່ວມໃນຂະບວນການຜະລິດ, ເກັບຮັກສາ, ຂົນສົ່ງ, ສົ່ງອອກ, ຈັດຊື້ ແລະ ຈຳໜ່າຍສິນຄ້າຖິ່ນກຳເນີດ;

2. **ຜູ້ຮ້ອງຂໍ** ໝາຍເຖິງສະມາຄົມສົ່ງເສີມສິນຄ້າຖິ່ນກຳເນີດ ທີ່ໄດ້ຍື່ນຄຳຮ້ອງຂໍຈົດທະບຽນຖິ່ນກຳເນີດ ຫຼື ດັດແກ້ ຫຼື ຍົກເລີກການຈົດທະບຽນຖິ່ນກຳເນີດ;
3. **ຄຳຮ້ອງ** ໝາຍເຖິງສຳນວນເອກະສານການຍື່ນຄຳຮ້ອງຂໍຈົດທະບຽນຖິ່ນກຳເນີດ ຫຼື ດັດແກ້ຫຼື ຍົກເລີກ ການຈົດທະບຽນຖິ່ນກຳເນີດ;
4. **ສຳນວນເອກະສານກ່ຽວກັບຄຸນລັກສະນະສິນຄ້າຖິ່ນກຳເນີດ** ໝາຍເຖິງຂໍ້ມູນທີ່ຜູ້ຮ້ອງຂໍສ້າງຂຶ້ນທີ່ລະບຸຂອບເຂດ, ທີ່ມາ, ວິທີ ແລະ ຂັ້ນຕອນການຜະລິດ, ຄຸນນະພາບ, ຊື່ສຽງ ຫຼື ລາຍລະອຽດຕ່າງໆຂອງຜະລິດຕະພັນ ແລະ ວິທີການກວດສອບຄຸນນະພາບຂອງສິນຄ້າຖິ່ນກຳເນີດ;
5. **ຜູ້ຄັດຄ້ານ** ໝາຍເຖິງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ສະເໜີຂໍຄັດຄ້ານຕໍ່ການຮ້ອງຂໍຈົດທະບຽນຖິ່ນກຳເນີດ;
6. **ການຄັດຄ້ານ** ໝາຍເຖິງບຸກຄົນທີສາມ ຕາມທີ່ລະບຸໃນຂໍ້ 6 ຂອງມາດຕານີ້ທີ່ໄດ້ຍື່ນຄ□າ ສະ ເໜີຂໍຄັດຄ້ານຕໍ່ການຮ້ອງຂໍຈົດທະບຽນຖິ່ນກຳເນີດ ທີ່ໄດ້ເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບຊັບສິນອຸດສາຫະກຳ;
7. **ການຍົກເລີກ** ໝາຍເຖິງການຍື່ນຄຳຮ້ອງຂໍຍົກເລີກການຈົດທະບຽນຖິ່ນກຳເນີດໂດຍເຈົ້າຂອງຖິ່ນກຳເນີດເອງ ຫຼື ບຸກຄົນທີສາມ ທີ່ຍື່ນຄຳຮ້ອງຂໍຍົກເລີກການຈົດທະບຽນຖິ່ນກຳເນີດ ຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 44 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ;
8. **ເຈົ້າຂອງຖິ່ນກຳເນີດ** ໝາຍເຖິງສະມາຄົມສົ່ງເສີມສິນຄ້າຖິ່ນກຳເນີດ ທີ່ໄດ້ຈົດທະບຽນຖິ່ນກຳເນີດ;
9. **ສິນຄ້າຖິ່ນກຳເນີດ** ໝາຍເຖິງຜະລິດຕະພັນກະສິກຳ, ຫັດຖະກຳ, ອາຫານ ແລະ ເຄື່ອງດື່ມທີ່ຖືກຜະລິດ ຫຼື ແປຮູບ ໃນພື້ນທີ່ຖິ່ນກຳເນີດ;
10. **ການກວດສອບ** ໝາຍເຖິງການກວດສອບພາຍໃນ ແລະ ພາຍນອກ ເພື່ອໃຫ້ສອດຄ່ອງກັບສຳນວນເອກະສານກ່ຽວກັບຄຸນລັກສະນະສິນຄ້າຖິ່ນກຳເນີດ ທີ່ດຳເນີນໂດຍສະມາຄົມສົ່ງເສີມສິນຄ້າຖິ່ນກຳເນີດ ແລະ ໜ່ວຍງານກວດສອບສິນຄ້າຖິ່ນກຳເນີດ ຫຼື ການຈັດຕັ້ງທີ່ໄດ້ຮັບມອບໝາຍ;
11. **ການໂຈະ** ໝາຍເຖິງການດຳເນີນການໂດຍກົມຕໍ່ສະມາຊິກໃດໜຶ່ງ ຂອງສະມາຄົມຖິ່ນກຳເນີດ ເພື່ອໃຫ້ຢຸດການນຳໃຊ້ຖິ່ນກຳເນີດຊົ່ວຄາວ ໃນກໍລະນີທີ່ບໍ່ປະຕິບັດຕາມເງື່ອນໄຂທີ່ໄດ້ຂໍ້ກຳນົດໄວ້ໃນເອກະສານກ່ຽວກັບຄຸນລັກສະນະສິນຄ້າຖິ່ນກຳເນີດ;
12. **ປະເທດຕົ້ນກຳເນີດ** ໝາຍເຖິງປະເທດ ຫຼື ບັນດາປະເທດ ຫຼື ສະຫະພັນພາສີທີ່ກວມເອົາຂອບເຂດ ຫຼື ລວມເອົາເຂດພູມສາດ ຫຼື ທີ່ຕັ້ງທີ່ເປັນສະຖານທີ່ຜະລິດສິນຄ້າຖິ່ນກຳເນີດ;
13. **ໃບມອບສິດ** ໝາຍເຖິງເອກະສານທີ່ເປັນລາຍລັກອັກສອນ ຊຶ່ງເຈົ້າຂອງສິດໄດ້ມອບສິດຂອງຕົນໃຫ້ ບຸກຄົນໜຶ່ງ ຫຼື ຫຼາຍຄົນ ປະຕິບັດໜ້າທີ່ແທນຕົນ;
14. **ຜູ້ມອບສິດ** ໝາຍເຖິງເຈົ້າຂອງຖິ່ນກຳເນີດທີ່ມອບສິດຂອງຕົນ ໃຫ້ ບຸກຄົນໜຶ່ງ ຫຼື ຫຼາຍຄົນ ປະຕິບັດໜ້າທີ່ແທນຕົນ ໃນການຍື່ນຄຳຮ້ອງຂໍຈົດທະບຽນຖິ່ນກຳເນີດ ຫຼື ດຳເນີນການອື່ນໆ ນຳກົມຊັບສິນທາງປັນຍາ;
15. **ຜູ້ຕາງໜ້າ** ໝາຍເຖິງທະນາຍຄວາມ ຫຼື ຕົວແທນ ທີ່ໄດ້ຮັບອະນຸຍາດຈາກເຈົ້າຂອງຖິ່ນກຳເນີດ ໃນການຍື່ນຄຳຮ້ອງຂໍຈົດທະບຽນຖິ່ນກຳເນີດ ຫຼື ດຳເນີນການ ອື່ນໆນ□າກົມຊັບສິນທາງປັນຍາ.

**ມາດຕາ 4. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ມີສິດໄດ້ຮັບການປົກປ້ອງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 26 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ມີສິດໄດ້ຮັບການປົກປ້ອງຖິ່ນກຳເນີດ, ຍື່ນຄຳຮ້ອງຂໍຈົດທະບຽນຖິ່ນກຳເນີດ, ໄດ້ຮັບໃບຢັ້ງຢືນການຈົດທະບຽນ, ນຳໃຊ້ສິດຂອງຕົນໃນການດຳເນີນການແກ້ໄຂທາງດ້ານບໍລິຫານ ຫຼື ຮ້ອງຟ້ອງຕໍ່ສານ ແລະ ດຳເນີນການເຄື່ອນໄຫວອື່ນໆ ຕາມທີ່ໄດ້ກຳນົດໃນກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ແລະ ຂໍ້ຕົກລົງສະບັບນີ້.

## ໝວດທີ 3
## ເງື່ອນໄຂ ແລະ ຂັ້ນຕອນການຈົດທະບຽນຖິ່ນກຳເນີດ

**ມາດຕາ 5 ຜະລິດຕະພັນທີ່ສາມາດໄດ້ຮັບໃບຢັ້ງຢືນຖິ່ນກຳເນີດ**

ຜະລິດຕະພັນ ທີ່ສາມາດໄດ້ຮັບໃບຢັ້ງຢືນຖິ່ນກຳເນີດ ຕ້ອງມີເງື່ອນໄຂຄົບຖ້ວນດັ່ງທີ່ໄດ້ກຳນົດໄວ້ໃນ ມາດຕາ 18 ແລະ ບໍ່ຂັດກັບ ມາດຕາ 25 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ.

ເງື່ອນໄຂຄົບຖ້ວນທີ່ສາມາດໄດ້ຮັບໃບຢັ້ງຢືນຖິ່ນກຳເນີດ ມີດັ່ງນີ້:

1. ສິ່ງບົ່ງບອກໃຫ້ເຫັນ ທີ່ມາຂອງຂອງຜະລິດຕະພັນຈາກດິນແດນ, ເຂດ ຫຼື ທ້ອງຖິ່ນຂອງປະເທດໃດໜຶ່ງ;
2. ຖິ່ນກຳເນີດທາງພູມສາດ ປັນສ່ວນສຳຄັນເຮັດໃຫ້ຜະລິດຕະພັນມີຄຸນນະພາບ ແລະ ຊື່ສຽງ ຫຼື ຄຸນລັກສະນະອື່ນ. ຄຸນນະພາບ ແລະ ຊື່ສຽງ ຫຼື ຄຸນລັກສະນະອື່ນນັ້ນ ແມ່ນອີງໃສ່ປັດໃຈທາງທຳມະຊາດ ທີ່ປະກອບດ້ວຍສະພາບຂອງດິນ, ອາກາດ, ນ້ຳ, ລະບົບນິເວດ, ເງື່ອນໄຂທຳມະຊາດ ແລະ ປັດໃຈມະນຸດ ລວມທັງຄວາມຊຳນິຊຳນານ ແລະ ປະສົບຫານຂອງຜູ້ຜະລິດ ແລະ ກຳມະວິທີການຜະລິດ ທີ່ມີມາແບບດັ້ງເດີມຂອງທ້ອງຖິ່ນນັ້ນ.

**ມາດຕາ 6 ການເປັນຜູ້ຮ້ອງຂໍຖິ່ນກຳເນີດໃນ ສປປ ລາວ**

ຜູ້ຮ້ອງຂໍທີ່ຕ້ອງການຈົດທະບຽນຖິ່ນກຳເນີດໃນ ສປປ ລາວ ຈະຕ້ອງໄດ້ສ້າງຕັ້ງສະມາຄົມຖິ່ນກຳເນີດຂຶ້ນ ແລະ ຈະຕ້ອງປະຕິບັດຄວາມຮັບຜິດຊອບຂອງຕົນຕາມກົດລະບຽບພາຍໃນຂອງສະມາຄົມ ແລະ ປະຕິບັດໜ້າທີ່ວຽກງານໂດຍບໍ່ຫວັງຜົນກຳໄລ. ສະມາຄົມຈະຕ້ອງຮັບປະກັນວ່າສະມາຊິກຂອງຕົນ ປະຕິບັດຕາມສຳນວນເອກະສານກ່ຽວກັບຄຸນລັກສະນະສິນຄ້າຖິ່ນກຳເນີດ ແລະ ພັນທະອື່ນໆ ທີ່ໄດ້ຮັບມອບໝາຍຕາມກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ແລະ ຂໍ້ຕົກລົງສະບັບນີ້.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ຈະຖືວ່າ ເປັນສະມາຄົມສົ່ງເສີມສິນຄ້າຖິ່ນກຳເນີດໄດ້ ຖ້າຫາກສາມາດຢັ້ງຢືນຄວາມຖືກຕ້ອງຕາມເງື່ອນໄຂພິເສດດັ່ງຕໍ່ໄປນີ້:

1. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງນັ້ນ ເປັນພຽງຜູ້ດຽວທີ່ສະໝັກໃຈຍື່ນຄຳຮ້ອງຂໍຈົດທະບຽນຖິ່ນກຳເນີດ;
2. ຂອບເຂດການຜະລິດຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງນັ້ນ ປະກອບດ້ວຍຄຸນລັກສະນະແຕກຕ່າງຈາກພື້ນທີ່ໃກ້ຄຽງ ຫຼື ຄຸນລັກສະນະຂອງຜະລິດຕະພັນ ມີຄວາມແຕກຕ່າງຈາກຜະລິດຕະພັນທີ່ຜະລິດໃນພື້ນທີ່ໃກ້ຄຽງ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຂອງຕ່າງປະເທດ ທີ່ຕ້ອງການຂໍຈົດທະບຽນຖິ່ນກຳເນີດໃນ ສປປ ລາວ ຕ້ອງມີຫຼັກຖານຢັ້ງຢືນການປົກປ້ອງຖິ່ນກຳເນີດ ຢູ່ໃນປະເທດຕົ້ນກຳເນີດ.

**ມາດຕາ 8 ການຍື່ນຄຳຮ້ອງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີສິດໄດ້ຮັບການປົກປ້ອງ ທີ່ມີຈຸດປະສົງຂໍຈົດທະບຽນຖິ່ນກຳເນີດ ສາມາດຍື່ນຄຳຮ້ອງຂໍຈົດທະບຽນຖິ່ນກຳເນີດຢູ່ນຳກົມຊັບສິນທາງປັນຍາ ຕາມແບບພິມຂອງກົມຊັບສິນທາງປັນຍາ ແລະ ຕ້ອງປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ຍື່ນຢູ່ນຳກົມຊັບສິນທາງປັນຍາ ຊຶ່ງຢ່າງໜ້ອຍຕ້ອງປະຕິບັດໃຫ້ໄດ້ຕາມເງື່ອນໄຂຕ່ຳສຸດຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 35 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ຊຶ່ງປະກອບມີ:
   - 1.1 ຄຳຮ້ອງຂໍຈົດທະບຽນຖິ່ນກຳເນີດ ຕາມແບບພິມ;
   - 1.2 ຮູບຂອງຖິ່ນກຳເນີດທີ່ຈະແຈ້ງ;
   - 1.3 ສິນຄ້າທີ່ກ່ຽວຂ້ອງກັບຖິ່ນກຳເນີດ ແລະ ວິທີການກວດກາທີ່ຈະນຳໃຊ້;
   - 1.4 ໃບຮັບເງິນຄ່າທຳນຽມ ແລະ ຄ່າບໍລິການ.
2. ກົມຊັບສິນທາງປັນຍາຕ້ອງຮັບເອົາຄຳຮ້ອງ, ອອກໃບຮັບຄຳຮ້ອງຊຶ່ງລະບຸ ເລກທີ ແລະ ວັນທີຍື່ນຄຳຮ້ອງ ໃນກໍລະນີ ທີ່ຄຳຮ້ອງຫາກສອດຄ່ອງຕາມເງື່ອນໄຂຕ່ຳສຸດ;
3. ໃນກໍລະນີ ທີ່ຄຳຮ້ອງຫາກບໍ່ສອດຄ່ອງຕາມເງື່ອນໄຂຕ່ຳສຸດ ກົມຊັບສິນທາງປັນຍາ ຈະບໍ່ຮັບເອົາຄຳຮ້ອງດັ່ງກ່າວ;
4. ໃນກໍລະນີ ຜູ້ຮ້ອງຂໍມີຈຸດປະສົງຢາກຖອນຄຳຮ້ອງ ຫຼື ຄຳຮ້ອງຖືກສະຫຼະສິດ ຫຼື ຖືກປະຕິເສດຈະບໍ່ໄດ້ສົ່ງຄືນຄ່າທຳນຽມ ແລະ ຄ່າບໍລິການທີ່ຈ່າຍໄປແລ້ວ.

**ມາດຕາ 9 ສຳນວນຄຳຮ້ອງຂໍຈົດທະບຽນຖິ່ນກຳເນີດ**

ສຳນວນຄຳຮ້ອງຂໍຈົດທະບຽນຖິ່ນກຳເນີດ ແລະ ເອກະສານຄັດຕິດອື່ນໆ ສາມາດຍື່ນເປັນພາສາລາວ ຫຼື ພາສາອັງກິດກໍໄດ້ ຊຶ່ງປະກອບມີເອກະສານ ດັ່ງນີ້:

1. ຄຳຮ້ອງຂໍຈົດທະບຽນຖິ່ນກຳເນີດຕາມແບບພິມຂອງກົມຊັບສິນທາງປັນຍາ;
2. ໃບມອບສິດ ທີ່ເປັນຕົ້ນສະບັບ ໃນກໍລະນີ ທີ່ຍື່ນຄຳຮ້ອງຜ່ານຜູ້ຕາງໜ້າ;
3. ສຳນວນເອກະສານ ກ່ຽວກັບຄຸນລັກສະນະສິນຄ້າຖິ່ນກຳເນີດ ຕາມທີ່ໄດ້ລະບຸໄວ້ໃນມາດຕາ 10 ຂອງຂໍ້ຕົກລົງສະບັບນີ້;
4. ຫຼັກຖານຢັ້ງຢືນການປົກປ້ອງຖິ່ນກຳເນີດ ຢູ່ໃນປະເທດຕົ້ນກຳເນີດ ໃນກໍລະນີ ທີ່ຄຳຮ້ອງຂໍຈົດທະບຽນນັ້ນ ໄດ້ອີງໃສ່ການປົກປ້ອງຢູ່ຕ່າງປະເທດ;
5. ໃບຮັບເງິນຄ່າທຳນຽມ ແລະ ຄ່າບໍລິການ.

ໃນກໍລະນີຄຳຮ້ອງ ແລະ ເອກະສານທີ່ຍື່ນເປັນພາສາອັງກິດ ຕ້ອງແປເປັນພາສາລາວໂດຍສອດຄ່ອງຕາມ ມາດຕາ 37 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ. ຖ້າບໍ່ປະຕິບັດຕາມເງື່ອນໄຂດັ່ງກ່າວ ຄຳຮ້ອງຈະບໍ່ຖືກນຳມາພິຈາລະນາ ແລະ ຖືວ່າຄຳຮ້ອງນັ້ນຖືກສະຫຼະສິດ.

ຜູ້ຮ້ອງຂໍບໍ່ຈຳເປັນຕ້ອງແປເນື້ອໃນບາງສ່ວນຂອງຄຳຮ້ອງເຊັ່ນ: ຊື່ ແລະ ທີ່ຢູ່ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ແລະ ຄຳສັບທາງດ້ານວິຊາການ.

ໃນກໍລະນີ ຖິ່ນກຳເນີດໃດໜຶ່ງຫາກບໍ່ເປັນຕົວອັກສອນລາແຕັງຕ້ອງໄດ້ແປເປັນພາສາລາວ ຫຼື ຕີຄວາມໝາຍ ແລະ ການອ່ານອອກສຽງຂອງຖິ່ນກຳເນີດນັ້ນ.

**ມາດຕາ 10 ສຳນວນເອກະສານກ່ຽວກັບຄຸນລັກສະນະສິນຄ້າຖິ່ນກຳເນີດ**

ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 3, 4, 5 ແລະ 6 ມາດຕາ 35 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ລວມເຂົ້າກັນເປັນເອກະສານກ່ຽວກັບຄຸນລັກສະນະສິນຄ້າຖິ່ນກຳເນີດ ຊຶ່ງມີຂໍ້ມູນດັ່ງນີ້:

1. ຊື່ທີ່ຈະຖືກປົກປ້ອງໂດຍຖິ່ນກຳເນີດຊຶ່ງເປັນຊື່ທີ່ນຳໃຊ້ບໍ່ວ່າໃນການຄ້າ ຫຼື ພາສາທົ່ວໄປ;

2. ຄໍາອະທິບາຍກ່ຽວກັບສິນຄ້າທີ່ຮ້ອງຂໍຈົດທະບຽນຖິ່ນກໍາເນີດຊຶ່ງລວມມີວັດຖຸດິບ, ລວມທັງຮູບຮ່າງ, ຄຸນລັກສະນະທາງເຄມີ, ຈຸລິນຊີ ຫຼື ລົດຊາດສະເພາະຂອງສິນຄ້າຖິ່ນກໍາເນີດ;
3. ຄໍາອະທິບາຍກ່ຽວກັບພື້ນທີ່ທາງພູມສາດທີ່ກໍານົດທີ່ມີຄວາມກ່ຽວພັນຕາມທີ່ໄດ້ລະບຸໄວ້ໃນຂໍ້ 6 ຂອງມາດຕານີ້;
4. ຫຼັກຖານທີ່ບົ່ງບອກວ່າຜະລິດຕະພັນແມ່ນມີຖິ່ນກໍາເນີດທີ່ມາຈາກພື້ນທີ່ທີ່ໄດ້ກໍານົດ;
5. ຄໍາອະທິບາຍກ່ຽວກັບວິທີການທີ່ໄດ້ມາຂອງຜະລິດຕະພັນ; ຄໍາອະທິບາຍກ່ຽວກັບວິທີແລະຂັ້ນຕອນການຜະລິດຂອງສິນຄ້າຖິ່ນກໍາເນີດ;
6. ລາຍລະອຽດກ່ຽວກັບການເຊື່ອມຕໍ່ລະຫວ່າງຄຸນນະພາບ, ຊື່ສຽງ ຫຼື ລາຍລະອຽດຕ່າງໆຂອງສິນຄ້າກັບຖິ່ນກໍາເນີດ;
7. ຊື່ ແລະ ທີ່ຢູ່ຂອງໜ່ວຍງານ ຢັ້ງຢືນຄວາມຖືກຕ້ອງຕາມສໍານວນເອກະສານ ຄຸນລັກສະນະຂອງສິນຄ້າຖິ່ນກໍາເນີດ;
8. ສິນຄ້າທີ່ກ່ຽວຂ້ອງກັບຖິ່ນກໍາເນີດ ແລະ ວິທີການກວດກາທີ່ຈະນໍາໃຊ້;
9. ລະບຽບການສະເພາະກ່ຽວກັບການຕິດກາໝາຍຖິ່ນກໍາເນີດໃສ່ສິນຄ້າ;

### ມາດຕາ 11 ເງື່ອນໄຂຕໍ່າສຸດໃນການໄດ້ຮັບວັນທີຍື່ນຄໍາຮ້ອງ

ຄໍາຮ້ອງຂໍຈົດທະບຽນຖິ່ນກໍາເນີດທີ່ມີເງື່ອນໄຂຕໍ່າສຸດ ໃນການໄດ້ຮັບວັນທີຍື່ນຄໍາຮ້ອງຕ້ອງປະກອບດ້ວຍ ຊື່, ທີ່ຢູ່, ສັນຊາດຂອງຜູ້ຮ້ອງຂໍ, ຮູບຂອງຖິ່ນກໍາເນີດທີ່ຈະແຈ້ງ, ສິນຄ້າທີ່ກ່ຽວຂ້ອງກັບຖິ່ນກໍາເນີດ ແລະ ວິທີການກວດກາທີ່ຈະນໍາໃຊ້. ນອກຈາກນັ້ນ ຍັງຕ້ອງມີໃບມອບສິດທີ່ລະບຸຊື່ ແລະ ທີ່ຢູ່ຂອງຜູ້ຕາງໜ້າ ໃນກໍລະນີທີ່ຍື່ນຄໍາຮ້ອງຜ່ານຜູ້ຕາງໜ້າພ້ອມດ້ວຍໃບຮັບເງິນ ຄ່າທໍານຽມ ແລະ ຄ່າບໍລິການ.

### ມາດຕາ 12 ການກວດສອບເບື້ອງຕົ້ນ

ພາຍຫຼັງ ຮັບຄໍາຮ້ອງຂໍຈົດທະບຽນຖິ່ນກໍາເນີດແລ້ວ ກົມຊັບສິນທາງປັນຍາ ຕ້ອງດໍາເນີນການກວດສອບເບື້ອງຕົ້ນກ່ຽວກັບຄວາມຄົບຖ້ວນ ແລະ ຄວາມສອດຄ່ອງຕາມເງື່ອນໄຂຂອງສໍານວນຄໍາຮ້ອງ ດັ່ງທີ່ໄດ້ກໍານົດໄວ້ໃນ ມາດຕາ 35 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ແລະ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 6, 9, 10 ແລະ 11 ຂອງຂໍ້ຕົກລົງສະບັບນີ້. ການກວດສອບເບື້ອງຕົ້ນຕ້ອງດໍາເນີນການພາຍໃນກໍານົດເວລາ 15 ວັນ ນັບແຕ່ວັນຮັບຄໍາຮ້ອງເປັນຕົ້ນໄປ.

ໃນກໍລະນີສໍານວນຄໍາຮ້ອງ ຫາກບໍ່ຄົບຖ້ວນ ຫຼື ບໍ່ສອດຄ່ອງຕາມເງື່ອນໄຂ, ກົມຊັບສິນທາງປັນຍາຕ້ອງແຈ້ງໃຫ້ຜູ້ຮ້ອງຂໍຊາບ ເພື່ອສະໜອງໃຫ້ຄົບຖ້ວນ ຫຼື ດັດແກ້ໃຫ້ສອດຄ່ອງຕາມເງື່ອນ ໄຂດັ່ງກ່າວ ພາຍໃນໄລຍະເວລາ 60 ວັນ ນັບແຕ່ວັນທີອອກແຈ້ງການເປັນຕົ້ນໄປ.

ໃນກໍລະນີ ຜູ້ຮ້ອງຂໍບໍ່ສາມາດປະຕິບັດພາຍໃນກໍານົດເວລາດັ່ງກ່າວ ກົມຊັບສິນທາງປັນຍາຕ້ອງແຈ້ງເປັນລາຍລັກອັກສອນໃຫ້ຜູ້ຮ້ອງຂໍຊາບວ່າ ຈະບໍ່ພິຈາລະນາຄໍາຮ້ອງຂໍດັ່ງກ່າວ.

ໃນກໍລະນີ ສໍານວນຄໍາຮອງດັ່ງກ່າວ ຫາກສອດຄ່ອງຕາມເງື່ອນໄຂການກວດສອບເບື້ອງຕົ້ນກົມຊັບສິນທາງປັນຍາ ຈະນໍາເອົາຄໍາຮ້ອງດັ່ງກ່າວ ເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການກ່ຽວກັບການຈົດທະບຽນຊັບສິນອຸດສາຫະກໍາ.

### ມາດຕາ 13 ການເຜີຍແຜ່ຄໍາຮ້ອງ

ພາຍຫຼັງສໍາເລັດການກວດສອບເບື້ອງຕົ້ນ ສໍານວນຄໍາຮ້ອງຂໍຈົດທະບຽນຖິ່ນກໍາເນີດ, ພາຍໃນໄລຍະເວລາ 15 ວັນ ກົມຊັບສິນທາງປັນຍາຕ້ອງເຜີຍແຜ່ຄໍາຮ້ອງຂໍຈົດທະບຽນຖິ່ນກໍາເນີດ ລົງໃນຈົດໝາຍເຫດທາງລັດຖະການກ່ຽວກັບການຈົດທະບຽນຊັບສິນອຸດສາຫະກໍາ ຊຶ່ງການເຜີຍແຜ່ ຕ້ອງ

ປະກອບມີຂໍ້ມູນດັ່ງນີ້:

1. ຖິ່ນກຳເນີດທີ່ຮ້ອງຂໍການປົກປ້ອງ;
2. ເລກທີ ແລະ ວັນທີຍື່ນຄຳຮ້ອງ;
3. ຊື່ ແລະ ທີ່ຢູ່ ຂອງຜູ້ຍື່ນຄຳຮ້ອງ;
4. ລາຍການສິນຄ້າ ທີ່ຈະນຳໃຊ້ຖິ່ນກຳເນີດ;
5. ລາຍລະອຽດກ່ຽວກັບຄຸນນະພາບ, ຊື່ສຽງ ຫຼື ຄຸນລັກສະນະສະເພາະຂອງສິນຄ້າ ທີ່ນຳໃຊ້ຖິ່ນກຳເນີດ;
6. ລາຍລະອຽດທີ່ສະແດງໃຫ້ເຫັນຄວາມສຳພັນລະຫວ່າງ ຄຸນນະພາບ, ຊື່ສຽງ ຫຼື ຄຸນລັກສະນະສະເພາະຂອງສິນຄ້າ ກັບຖິ່ນກຳເນີດ;
7. ລາຍລະອຽດກ່ຽວກັບທີ່ຕັ້ງທາງພູມສາດ ແລະ ແຜນທີ່ຈະແຈ້ງຂອງຖິ່ນກຳເນີດ ທີ່ຂໍຈົດທະບຽນ.

ພາຍໃນໄລຍະເວລາ 60 ວັນ ນັບແຕ່ວັນທີທີ່ໄດ້ເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການກ່ຽວກັບການຈົດທະບຽນຖິ່ນກຳເນີດ ບຸກຄົນທີສາມສາມາດສະເໜີຄັດຄ້ານຄຳຮ້ອງດັ່ງກ່າວ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 39 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ.

### ມາດຕາ 14 ການຄັດຄ້ານຄຳຮ້ອງ

ບຸກຄົນທີສາມມີສິດຍື່ນຄຳຮ້ອງຂໍຄັດຄ້ານຄຳຮ້ອງຂໍຈົດທະບຽນຖິ່ນກຳເນີດ ເຖິງກົມຊັບສິນທາງປັນຍາ ໂດຍປະກອບຕາມແບບພິມຂອງກົມຊັບສິນທາງປັນຍາ ພ້ອມທັງຈ່າຍຄ່າບໍລິການ.

ສຳນວນຄຳຮ້ອງຂໍຄັດຄ້ານ ຄຳຮ້ອງຂໍຈົດທະບຽນຖິ່ນກຳເນີດ ຕ້ອງປະກອບມີເອກະສານດັ່ງນີ້:

1. ໃບຄຳຮ້ອງຂໍຄັດຄ້ານ ຄຳຮ້ອງຂໍຈົດທະບຽນຖິ່ນກຳເນີດ;
2. ເອກະສານ ແລະ ຫຼັກຖານຊີ້ແຈງ ກ່ຽວກັບການຄັດຄ້ານ;
3. ໃບຮັບເງິນຄ່າບໍລິການ.

### ມາດຕາ 15 ການພິຈາລະນາການຄັດຄ້ານຄຳຮ້ອງ

ການພິຈາລະນາການຄັດຄ້ານຄຳຮ້ອງປະກອບມີ ດັ່ງນີ້:

1. ກົມຊັບສິນທາງປັນຍາ ຕ້ອງແຈ້ງໃຫ້ຜູ້ຮ້ອງຂໍຈົດທະບຽນຖິ່ນກຳເນີດທີ່ຖືກຄັດຄ້ານນັ້ນຊາບຢ່າງທັນການ ພາຍຫຼັງໄດ້ຮັບຄຳຮ້ອງຂໍຄັດຄ້ານ;
2. ຜູ້ຮ້ອງຂໍຈົດທະບຽນຕ້ອງຍື່ນຄຳຊີ້ແຈງ ພ້ອມດ້ວຍຂໍ້ມູນຫຼັກຖານກ່ຽວກັບ ຖິ່ນກຳເນີດຂອງຕົນ ເຖິງກົມຊັບສິນທາງປັນຍາ ພາຍໃນກຳນົດເວລາ 60 ວັນ ນັບແຕ່ວັນທີໄດ້ຮັບແຈ້ງການກ່ຽວກັບການຄັດຄ້ານດັ່ງກ່າວ;
3. ກົມຊັບສິນທາງປັນຍາຕ້ອງສົ່ງສຳເນົາຄຳຊີ້ແຈງນັ້ນໃຫ້ຜູ້ຂໍຄັດຄ້ານຊາບ;
4. ກົມຊັບສິນທາງປັນຍາຕ້ອງພິຈາລະນາຄຳຊີ້ແຈງ ແລະ ຂໍ້ມູນຫຼັກຖານດັ່ງກ່າວ;
5. ໃນກໍລະນີ ຂໍ້ມູນຫຼັກຖານຂອງຜູ້ຂໍຄັດຄ້ານ ແລະ/ຫຼື ຜູ້ຮ້ອງຂໍຈົດທະບຽນຖິ່ນກຳເນີດ ຫາກບໍ່ຄົບຖ້ວນ ຫຼື ຊັດເຈນ ກົມຊັບສິນທາງປັນຍາຈະອອກໜັງສືເຊີນໃຫ້ຄູ່ກໍລະນີມາ ຊີ້ແຈງ ຫຼື ສະແດງຫຼັກຖານ ຫຼື ສະໜອງຂໍ້ມູນເພີ່ມເຕີມ;
6. ຖ້າຜູ້ຮ້ອງຂໍຈົດທະບຽນ ຫຼື ຜູ້ຂໍຄັດຄ້ານບໍ່ປະຕິບັດຕາມໜັງສືເຊີນຂອງກົມຊັບສິນທາງປັນຍາພາຍໃນກຳນົດເວລາ 60 ວັນ ນັບແຕ່ວັນອອກໜັງສືເຊີນ ກົມຊັບສິນທາງປັນຍາຈະພິຈາລະນາການຄັດຄ້ານຕາມຫຼັກຖານທີ່ມີ;

7. ກົມຊັບສິນທາງປັນຍາ ຕ້ອງແຈ້ງຜົນການພິຈາລະນາພ້ອມດ້ວຍເຫດຜົນໃຫ້ຜູ້ຮ້ອງຂໍຈົດທະບຽນ ແລະ ຜູ້ຂໍຄັດຄ້ານຊາບ;
8. ຫາກກົມຊັບສິນທາງປັນຍາ ພິຈາລະນາແລ້ວເຫັນວ່າ ການຄັດຄ້ານມີເຫດຜົນ ແລະ ມີຫຼັກຖານພຽງພໍ ກົມຊັບສິນທາງປັນຍາຈະປະຕິເສດຄໍາຮ້ອງຂໍຈົດທະບຽນຖິ່ນກໍາເນີດດັ່ງກ່າວ;
9. ໃນກໍລະນີ ກົມຊັບສິນທາງປັນຍາຫາກພິຈາລະນາເຫັນວ່າ ການຄັດຄ້ານບໍ່ມີເຫດຜົນ ແລະ ບໍ່ມີຫຼັກຖານພຽງພໍ ກົມຊັບສິນທາງປັນຍາຈະຈົດທະບຽນຖິ່ນກໍາເນີດດັ່ງກ່າວ;
10. ຖ້າຫາກຄູ່ກໍລະນີ ບໍ່ພໍໃຈຕໍ່ການພິຈາລະນາດັ່ງກ່າວ ສາມາດອຸທອນ ເຖິງຄະນະກໍາມະການອຸທອນຂອງກົມຊັບສິນທາງປັນຍາ ພາຍໃນກໍານົດເວລາ 60 ວັນ ນັບແຕ່ມື້ອອກແຈ້ງການເປັນຕົ້ນໄປ.

**ມາດຕາ 16 ການກວດສອບເນື້ອໃນ**

ກົມຊັບສິນທາງປັນຍາຕ້ອງດໍາເນີນການກວດສອບເນື້ອໃນ ໂດຍອີງຕາມຖານຂໍ້ມູນຂອງກົມຊັບສິນທາງປັນຍາ ແລະ ສາກົນ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 40 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ເພື່ອພິຈາລະນາວ່າ ຄໍາຮ້ອງນັ້ນສອດຄ່ອງຕາມເງື່ອນໄຂທີ່ກໍານົດໄວ້ໃນ ມາດຕາ 18 ແລະ 25 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ.

ກົມຊັບສິນທາງປັນຍາ ຈະປະຕິເສດການຈົດທະບຽນຖິ່ນກໍາເນີດ ໃນກໍລະນີ ສໍານວນຄໍາຮ້ອງດັ່ງກ່າວ ຫາກບໍ່ສອດຄ່ອງຕາມເງື່ອນໄຂການຈົດທະບຽນ ແລະ ຕ້ອງແຈ້ງເຫດຜົນໃນການປະຕິເສດເບື້ອງຕົ້ນ ໃຫ້ຜູ້ຮ້ອງຂໍຊາບ.

ຜູ້ຮ້ອງຂໍມີໜ້າທີ່ສະໜອງຂໍ້ມູນ ແລະ ເອກະສານ ຫຼື ຄໍາຊີ້ແຈງ ພາຍຫຼັງ ທີ່ໄດ້ຮັບແຈ້ງການປະຕິເສດເບື້ອງຕົ້ນ ຕໍ່ກົມຊັບສິນທາງປັນຍາ ພາຍໃນໄລຍະເວລາ 60 ວັນ ນັບແຕ່ວັນທີ່ໄດ້ອອກແຈ້ງການເປັນຕົ້ນໄປ.

ກົມຊັບສິນທາງປັນຍາສາມາດຮຽກເອົາຂໍ້ມູນເພີ່ມເຕີມຈາກຜູ້ຮ້ອງຂໍໃນກໍລະນີຈໍາເປັນ. ຖ້າຫາກ ຜູ້ຮ້ອງຂໍບໍ່ປະຕິບັດຕາມກໍານົດເວລາໃນແຈ້ງການ ຄໍາຮ້ອງດັ່ງກ່າວຈະບໍ່ຖືກນໍາມາພິຈາລະນາ ແລະ ຖືວ່າຄໍາຮ້ອງນັ້ນຖືກສະຫຼະສິດ.

ກົມຊັບສິນທາງປັນຍາ ສາມາດຕໍ່ເວລາໃຫ້ຕື່ມອີກ 30 ວັນ ນັບແຕ່ວັນສິ້ນສຸດແຈ້ງການຄັ້ງທໍາອິດເປັນຕົ້ນໄປຖ້າມີເຫດຜົນພຽງພໍ.

ກົມຊັບສິນທາງປັນຍາຈະປະຕິເສດຂັ້ນສຸດທ້າຍ ຕໍ່ຄໍາຮ້ອງຂໍຈົດທະບຽນຖິ່ນກໍາເນີດດັ່ງກ່າວ ແລະ ແຈ້ງໃຫ້ຜູ້ຮ້ອງຂໍຊາບ ຖ້າຫາກຜູ້ຮ້ອງຂໍໄດ້ສະໜອງຂໍ້ມູນ ແລະ ເອກະສານ ຫຼື ຄໍາຊີ້ແຈງຕໍ່ກົມຊັບສິນທາງປັນຍາແລ້ວ ແຕ່ຍັງບໍ່ທັນພຽງພໍ.

**ມາດຕາ 17 ການດັດແກ້ໃນໄລຍະການກວດສອບ**

ຜູ້ຮ້ອງຂໍສາມາດດັດແກ້ຄໍາຮ້ອງໄດ້ທຸກເວລາໃນໄລຍະເວລາຂອງການກວດສອບ, ແຕ່ຕ້ອງດໍາເນີນກ່ອນໜ້າ ການຈົດທະບຽນ, ການສະຫຼະສິດ, ການປະຕິເສດຂັ້ນສຸດທ້າຍ ຫຼື ການສິ້ນສຸດການພິຈາລະນາອື່ນໆຂອງຄໍາຮ້ອງດັ່ງກ່າວ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 42 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາໂດຍບໍ່ຕ້ອງຈ່າຍຄ່າທໍານຽມ ແລະ ຄ່າບໍລິການ, ຊຶ່ງການດັດແກ້ຄໍາຮ້ອງນັ້ນ ຕ້ອງບໍ່ແມ່ນການດັດແກ້ດັ່ງຕໍ່ໄປນີ້:

1. ການນໍາເອົາສິນຄ້າໃໝ່ເຂົ້າໃນຄໍາຮ້ອງ;
2. ປັບປຸງຄຸນລັກສະນະສໍາຄັນ ຫຼື ລັກສະນະຂອງສິນຄ້າ;
3. ປ່ຽນແປງຄວາມກ່ຽວພັນຕາມທີ່ໄດ້ລະບຸໄວ້ໃນຂໍ້ 6 ຂອງ ມາດຕາ 10 ຂອງຂໍ້ຕົກລົງສະບັບນີ້ມີການປ່ຽນແປງ;

4. ປ່ຽນແປງ ຊື່ ຫຼື ສ່ວນໃດໜຶ່ງຂອງຊື່ຂອງຜະລິດຕະພັນ;
5. ການດັດແກ້ທີ່ຈະສົ່ງຜົນກະທົບຕໍ່ຂອບເຂດພື້ນທີ່ທີ່ກໍານົດເປັນຖິ່ນກໍາເນີດ.

**ມາດຕາ 18 ການຈົດທະບຽນ ແລະ ການເຜີຍແຜ່ຜົນຂອງການຈົດທະບຽນ**

ກົມຊັບສິນທາງປັນຍາຕ້ອງຈົດທະບຽນຖິ່ນກໍາເນີດ, ບັນທຶກຂໍ້ມູນທີ່ກ່ຽວຂ້ອງລົງໃນປຶ້ມບັນທຶກການຈົດທະບຽນ, ຖານຂໍ້ມູນ ແລະ ເຜີຍແຜ່ຜົນຂອງການຈົດທະບຽນຖິ່ນກໍາເນີດ ລົງໃນຈົດໝາຍເຫດທາງລັດຖະການກ່ຽວກັບການຈົດທະບຽນຊັບສິນອຸດສາຫະກໍາ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 44 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ.

ຜູ້ຮ້ອງຂໍສາມາດສະເໜີໃຫ້ ກົມເຜີຍແຜ່ຄືນໃໝ່ພ້ອມດ້ວຍຂໍ້ມູນທີ່ຖືກດັດແກ້ ໂດຍບໍ່ຕ້ອງຈ່າຍຄ່າບໍລິການ ໃນກໍລະນີ ການເຜີຍແຜ່ຫາກມີຂໍ້ຜິດພາດ ແລະ ຕ້ອງຍື່ນພາຍໃນ 60 ວັນ ນັບແຕ່ວັນເຜີຍແຜ່ຄັ້ງທໍາອິດ.

## ໝວດທີ 4
## ອາຍຸການປົກປ້ອງ ແລະ ການດໍາເນີນການອື່ນຫຼັງການຈົດທະບຽນຖິ່ນກໍາເນີດ

**ມາດຕາ 19 ອາຍຸການປົກປ້ອງ**

ອາຍຸການປົກປ້ອງຖິ່ນກໍາເນີດ ມີຕະຫຼອດໄປ ນັບແຕ່ວັນໄດ້ຮັບໃບຢັ້ງຢືນການຈົດທະບຽນເປັນຕົ້ນໄປ ແລະ ຈ່າຍຄ່າທໍານຽມ ແລະ ຄ່າບໍລິການເທື່ອດຽວ.

**ມາດຕາ 20 ການປ່ຽນຊື່ ແລະ/ຫຼື ທີ່ຢູ່**

ເຈົ້າຂອງຖິ່ນກໍາເນີດ ສາມາດຍື່ນຄໍາຮ້ອງຢູ່ນໍາກົມຊັບສິນທາງປັນຍາ ເພື່ອປ່ຽນແປງຂໍ້ມູນກ່ຽວກັບ ຊື່ ແລະ/ຫຼື ທີ່ຢູ່ ຂອງຕົນ ຕາມແບບພິມຂອງກົມຊັບສິນທາງປັນຍາ ພ້ອມທັງຈ່າຍຄ່າບໍລິການ. ຜູ້ຍື່ນຄໍາຮ້ອງຕ້ອງສະໜອງຂໍ້ມູນ ໃຫ້ຄົບຖ້ວນຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 9 ຂອງຂໍ້ຕົກລົງສະບັບນີ້.

ກົມຊັບສິນທາງປັນຍາ ຕ້ອງບັນທຶກທຸກການປ່ຽນແປງລົງໃນ ຖານຂໍ້ມູນ, ປຶ້ມບັນທຶກການຈົດທະບຽນ ແລະ ເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບການຈົດທະບຽນຊັບສິນອຸດສາຫະກໍາ.

**ມາດຕາ 21 ການສໍາເນົາໃບຢັ້ງຢືນການຈົດທະບຽນຖິ່ນກໍາເນີດ**

ການສໍາເນົາໃບຢັ້ງຢືນການຈົດທະບຽນຖິ່ນກໍາເນີດ ແມ່ນເພື່ອນໍາໃຊ້ເປັນຫຼັກຖານໃນການດໍາເນີນຄະດີຢູ່ສານ, ການຈົດທະບຽນຖິ່ນກໍາເນີດຢູ່ຕ່າງປະເທດ ແລະ ໃຊ້ແທນໃບຢັ້ງຢືນ ການຈົດທະບຽນທີ່ເສຍຫາຍ ຫຼື ເສຍ ຊຶ່ງເຈົ້າຂອງຖິ່ນກໍາເນີດທີ່ໄດ້ຮັບການຈົດທະບຽນ ສາມາດຍື່ນຄໍາຮ້ອງຢູ່ນໍາກົມຊັບສິນທາງປັນຍາ ເພື່ອຂໍສໍາເນົາໃບຢັ້ງຢືນການຈົດທະບຽນດັ່ງກ່າວ ຕາມແບບພິມຂອງກົມຊັບສິນທາງປັນຍາ ພ້ອມທັງຈ່າຍຄ່າບໍລິການ.

**ມາດຕາ 22 ການດັດແກ້ພາຍຫຼັງການຈົດທະບຽນ**

ເຈົ້າຂອງຖິ່ນກໍາເນີດ ສາມາດຍື່ນຄໍາຮ້ອງຂໍດັດແກ້ຂໍ້ມູນບາງສ່ວນ ຢູ່ໃນສໍານວນເອກະສານກ່ຽວກັບຄຸນລັກສະນະສິນຄ້າຖິ່ນກໍາເນີດ ຫຼື ດັດແກ້ບາງຂໍ້ຜິດພາດໃນການຮ້ອງຂໍຈົດທະບຽນ ຕາມແບບພິມຂອງກົມຊັບສິນທາງປັນຍາ ພ້ອມທັງຈ່າຍຄ່າບໍລິການ.

ກົມຊັບສິນທາງປັນຍາ ຈະອະນຸຍາດໃຫ້ດັດແກ້ຕາມຄຳຮ້ອງຂໍ ຖ້າຫາກວ່າ ແມ່ນການສະເໜີດັດແກ້ພຽງເລັກນ້ອຍ, ແຕ່ຖ້າການດັດແກ້ຫາກມີການປ່ຽນແປງ ລາຍການໃນສຳນວນເອກະສານກ່ຽວກັບຄຸນລັກສະນະສິນຄ້າຖິ່ນກຳເນີດ, ຜູ້ຮ້ອງຂໍຈະຕ້ອງຍື່ນຄຳຮ້ອງມາໃໝ່.

ການດັດແກ້ ທີ່ຈະບໍ່ຖືວ່າແມ່ນການດັດແກ້ເລັກນ້ອຍ ມີດັ່ງລຸ່ມນີ້:

1. ການດັດແກ້ທີ່ກ່ຽວຂ້ອງກັບຄຸນລັກສະນະທີ່ສຳຄັນຂອງສິນຄ້າ;
2. ການດັດແກ້ການເຊື່ອມຕໍ່ລະຫວ່າງຄຸນນະພາບ, ຊື່ສຽງ ຫຼື ລາຍລະອຽດຕ່າງໆຂອງ ສິນຄ້າຖິ່ນກຳເນີດ;
3. ການດັດແກ້ກ່ຽວກັບ ຊື່ ຫຼື ສ່ວນໃດໜຶ່ງຂອງຊື່ ສິນຄ້າ;
4. ການດັດແກ້ທີ່ເຮັດໃຫ້ມີການປ່ຽນແປງຂອບເຂດຖິ່ນກຳເນີດທີ່ໄດ້ກຳນົດໄວ້.

ກົມຊັບສິນທາງປັນຍາ ຕ້ອງເຜີຍແຜ່ຂໍ້ມູນກ່ຽວກັບການດັດແກ້ຂໍ້ມູນການຈົດທະບຽນຖິ່ນກຳເນີດທີ່ໄດ້ຖືກຮັບຮອງ ລົງໃນຈົດໝາຍເຫດທາງລັດຖະການກ່ຽວກັບການຈົດທະບຽນຊັບສິນອຸດສາຫະກຳ.

## ມາດຕາ 23 ສິດພາຍຫຼັງການຈົດທະບຽນຖິ່ນກຳເນີດ

ບັນດາສະມາຊິກຂອງສະມາຄົມສົ່ງເສີມສິນຄ້າຖິ່ນກຳເນີດ ຈະໄດ້ຮັບສິດນຳໃຊ້ຖິ່ນກຳເນີດທີ່ໄດ້ຮັບການຈົດທະບຽນ ແຕ່ສິດເຫຼົ່ານີ້ແມ່ນບໍ່ສາມາດມອບໂອນຕໍ່ໃຫ້ ບຸກຄົນ, ນິຕິບຸກຄົນ ແລະການຈັດຕັ້ງອື່ນໄດ້.

## ມາດຕາ 24 ການຍົກເລີກການຈົດທະບຽນຖິ່ນກຳເນີດ

ບຸກຄົນທີສາມ ມີສິດຍື່ນຄຳຮ້ອງຂໍຍົກເລີກການຈົດທະບຽນຖິ່ນກຳເນີດ ພາຍໃນໄລຍະເວລາ 5 ປີ ນັບແຕ່ວັນເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການກ່ຽວກັບການຈົດທະບຽນຊັບສິນອຸດສາຫະກຳເປັນຕົ້ນໄປ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 44 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ. ການຍື່ນຄຳຮ້ອງຂໍຍົກເລີກການຈົດທະບຽນຖິ່ນກຳເນີດ ໃຫ້ປະຕິບັດຕາມແບບພິມຂອງກົມຊັບສິນທາງປັນຍາ ພ້ອມທັງຈ່າຍຄ່າບໍລິການ.

ກົມຊັບສິນທາງປັນຍາ ມີສິດຍົກເລີກການຈົດທະບຽນຖິ່ນກຳເນີດທີ່ໄດ້ຮັບການປົກປ້ອງຕາມການພິຈາລະນາຂອງກົມ ຫຼື ຕາມການສະເໜີຂອງບຸກຄົນທີສາມ ໃນກໍລະນີດັ່ງນີ້:

1. ບໍ່ສາມາດປະຕິບັດຕາມເງື່ອນໄຂຂອງເອກະສານກ່ຽວກັບຄຸນລັກສະນະສິນຄ້າຖິ່ນກຳເນີດ;
2. ບໍ່ມີສິນຄ້າຖິ່ນກຳເນີດຈຳໜ່າຍໃນທ້ອງຕະຫຼາດເປັນເວລາຕໍ່າສຸດ 5 ປີ ນັບແຕ່ວັນເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການກ່ຽວກັບການຈົດທະບຽນຊັບສິນອຸດສາຫະກຳເປັນຕົ້ນໄປ;
3. ມີຫຼັກຖານພຽງພໍທີ່ເຮັດໃຫ້ເຊື່ອວ່າເຈົ້າຂອງຖິ່ນກຳເນີດທີ່ໄດ້ຮັບການຈົດທະບຽນບໍ່ແມ່ນເຈົ້າຂອງທີ່ແທ້ຈິງ;
4. ຖິ່ນກຳເນີດຕ່າງປະເທດທີ່ບໍ່ໄດ້ຮັບການປົກປ້ອງ ຫຼື ສິ້ນສຸດການປົກປ້ອງໃນປະເທດຕົ້ນກຳເນີດ, ຫຼື ຢຸດນຳໃຊ້ໃນປະເທດນັ້ນ;

ກົມຊັບສິນທາງປັນຍາ ຕ້ອງແຈ້ງໃຫ້ເຈົ້າຂອງຖິ່ນກຳເນີດຊາບ ໃນເມື່ອໄດ້ຮັບຄ□າສະເໜີຄັດຄ້ານຈາກບຸກຄົນທີສາມ.

ເຈົ້າຂອງຖິ່ນກຳເນີດສາມາດຍື່ນຄຳຊີ້ແຈງເຖິງກົມຊັບສິນທາງປັນຍາ ພາຍໃນເວລາ 60 ວັນ ນັບແຕ່ວັນທີອອກແຈ້ງການເປັນຕົ້ນໄປ.

ກົມຊັບສິນທາງປັນຍາຕ້ອງອອກໜັງສືຍົກເລີກຖິ່ນກຳເນີດ ແລະ ແຈ້ງໃຫ້ເຈົ້າຂອງຖິ່ນກຳເນີດຊາບ ໃນກໍລະນີ ເຈົ້າຂອງຖິ່ນກຳເນີດ ຫາກບໍ່ມີຄຳຊີ້ແຈງໃດໆໃຫ້ຖືວ່າເຈົ້າຂອງຖິ່ນກຳເນີດນັ້ນຍິນຍອມຕໍ່ການຍົກເລີກການຈົດທະບຽນຖິ່ນກຳເນີດຂອງຕົນ.

ກົມຊັບສິນທາງປັນຍາ ຕ້ອງຍົກເລີກການຈົດທະບຽນຖິ່ນກຳເນີດ ໃນກໍລະນີ ທີ່ບຸກຄົນທີສາມຫາກມີການຮ້ອງຟ້ອງຕໍ່ສານປະຊາຊົນ ແລະ ມີຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດ ໃຫ້ມີການຍົກເລີກການຈົດທະບຽນຖິ່ນກຳເນີດດັ່ງກ່າວ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 139 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ. ການຮ້ອງຟ້ອງດັ່ງກ່າວ ສາມາດຍື່ນເວລາໃດກໍໄດ້ຕະຫຼອດໄລຍະການປົກປ້ອງຖິ່ນກຳເນີດຍັງມີຜົນສັກສິດຢູ່.

ກົມຊັບສິນທາງປັນຍາ ຕ້ອງແຈ້ງຜົນການຍົກເລີກໃບຢັ້ງຢືນການຈົດທະບຽນຖິ່ນກຳເນີດໃຫ້ເຈົ້າຂອງຖິ່ນກຳເນີດ ແລະ ບຸກຄົນທີ່ຮ້ອງຂໍຍົກເລີກເພື່ອຊາບ.

ກົມຊັບສິນທາງປັນຍາຕ້ອງບັນທຶກລົງໃນຖານຂໍ້ມູນ ແລະ ເຜີຍແຜ່ການຍົກເລີກດັ່ງກ່າວ ລົງໃນຈົດໝາຍເຫດທາງລັດຖະການກ່ຽວກັບການຈົດທະບຽນຊັບສິນອຸດສາຫະກຳ ແລະ ແຈ້ງໃຫ້ສາທາລະນະຊົນຮັບຊາບ.

## ໝວດທີ 5
## ກາໝາຍຖິ່ນກຳເນີດແຫ່ງຊາດ

### ມາດຕາ 25 ກາໝາຍຖິ່ນກຳເນີດແຫ່ງຊາດ

ກາໝາຍຖິ່ນກຳເນີດແຫ່ງຊາດ ແມ່ນກາໝາຍທີ່ກຳນົດ ແລະ ສ້າງຂຶ້ນໂດຍກະຊວງວິທະຍາສາດ ແລະ ເຕັກໂນໂລຊີ, ກົມຊັບສິນທາງປັນຍາ ເພື່ອຢັ້ງຢືນສິນຄ້າຖິ່ນກຳເນີດທີ່ໄດ້ຮັບການຈົດທະບຽນແລ້ວ. ກົມຊັບສິນທາງປັນຍາເປັນຜູ້ຄຸ້ມຄອງ ແລະ ອອກໃບອະນຸຍາດນຳໃຊ້ກາໝາຍຖິ່ນກຳເນີດແຫ່ງຊາດ ໃຫ້ແກ່ສະມາຄົມສົ່ງເສີມສິນຄ້າຖິ່ນກຳເນີດ. ສຳລັບລາຍລະອຽດ ແລະ ການນຳໃຊ້ກາໝາຍຖິ່ນກຳເນີດແຫ່ງຊາດ ແມ່ນກຳນົດໄວ້ໃນລະບຽບການຕ່າງຫາກ.

### ມາດຕາ 26 ການນຳໃຊ້ກາໝາຍຖິ່ນກຳເນີດແຫ່ງຊາດ

ສະມາຊິກຂອງສະມາຄົມສົ່ງເສີມສິນຄ້າຖິ່ນກຳເນີດ ແລະ ປະຕິບັດຕາມເອກະສານກ່ຽວກັບຄຸນລັກສະນະສິນຄ້າຖິ່ນກຳເນີດຈະມີສິດໄດ້ຮັບການປົກປ້ອງ ແລະ ນຳໃຊ້ກາໝາຍຖິ່ນກຳເນີດແຫ່ງຊາດ.

ຜູ້ດຳເນີນການໃດໜຶ່ງ ທີ່ມີຈຸດປະສົງນຳໃຊ້ກາໝາຍຖິ່ນກຳເນີດແຫ່ງຊາດຕາມທີ່ໄດ້ລະບຸໄວ້ໃນວັກທີ 1 ຂອງມາດຕານີ້ ແລະ ມາດຕາ 23 ຂອງຂໍ້ຕົກລົງສະບັບນີ້ ຈະຕ້ອງຍື່ນໃບຄຳຮ້ອງຂໍອະ ນຸຍາດຫາສະມາຄົມສົ່ງເສີມສິນຄ້າຖິ່ນກຳເນີດ. ສະມາຄົມ ຕ້ອງອອກໃບອະນຸຍາດນຳໃຊ້ກາໝາຍຖິ່ນກຳເນີດແຫ່ງຊາດໃຫ້ຜູ້ຮ້ອງຂໍ.

ຜູ້ດຳເນີນການ ຕ້ອງຕິດກາໝາຍຖິ່ນກຳເນີດແຫ່ງຊາດ ທີ່ໄດ້ຮັບການຈົດທະບຽນຖິ່ນກຳເນີດ ຢູ່ ສປປ ລາວ ໃສ່ສະຫຼາກສິນຄ້າຂອງຕົນ. ນອກນັ້ນ, ຄຳວ່າ 'ຖິ່ນກຳເນີດທີ່ໄດ້ຮັບການປົກປ້ອງ' ຫຼື ຂຽນເປັນຕົວຫຍໍ້ເປັນອັກສອນລາແຕັງ '*P*GI' ກໍສາມາດຕິດໃສ່ສະຫຼາກໄດ້.

### ມາດຕາ 27 ຜູ້ນຳໃຊ້ກາໝາຍຖິ່ນກຳເນີດແຫ່ງຊາດ

ສະມາຄົມສົ່ງເສີມສິນຄ້າຖິ່ນກຳເນີດ ມີສິດນຳໃຊ້ກາໝາຍຖິ່ນກຳເນີດແຫ່ງຊາດ, ມີສິດຜະລິດກາໝາຍຖິ່ນກຳເນີດແຫ່ງຊາດ ເພື່ອຕິດໃສ່ສະຫຼາກສິນຄ້າທີ່ໄດ້ຮັບການຈົດທະບຽນຖິ່ນກຳເນີດ.

**ມາດຕາ 28 ການຄຸ້ມຄອງກາໝາຍຖິ່ນກຳເນີດແຫ່ງຊາດ**

ກົມຊັບສິນທາງປັນຍາ ຕ້ອງຄຸ້ມຄອງບັນຊີລາຍຊື່ຂອງສະມາຄົມສົ່ງເສີມສິນຄ້າຖິ່ນກຳເນີດທີ່ໄດ້ຮັບອະນຸຍາດ ໃຫ້ນຳໃຊ້ກາໝາຍຖິ່ນກຳເນີດແຫ່ງຊາດ ເພື່ອເປັນຂໍ້ມູນໃຫ້ແກ່ບຸກຄົນທີ່ສົນໃຈ.

ກົມຊັບສິນທາງປັນຍາ ມີສິດຮຽກສະມາຄົມມາ ຊີ້ແຈງ ຫຼື ສະໜອງຂໍ້ມູນ ຫຼື ເອກະສານ ຫຼື ຫຼັກຖານອື່ນໆທີ່ຈຳເປັນ ໃນກໍລະນີ ຜູ້ດຳເນີນການທີ່ໄດ້ຮັບອະນຸຍາດ ໃຫ້ນຳໃຊ້ກາໝາຍຖິ່ນກຳ ເນີດແຫ່ງຊາດຈາກສະມາຄົມ ຫາກບໍ່ປະຕິບັດຕາມຂໍ້ຕົກລົງສະບັບນີ້. ກົມຊັບສິນທາງປັນຍາມີສິດ ນຳໃຊ້ມາດຕະການທາງດ້ານບໍລິຫານ ຕໍ່ສະມາຄົມ ເຊັ່ນ:

1. ຍົກເລີກໃບອະນຸຍາດນຳໃຊ້ກາໝາຍຖິ່ນກຳເນີດແຫ່ງຊາດຂອງສະມາຄົມ ແລະ ສະມາຄົມຕ້ອງຢຸດເຊົາການນຳໃຊ້ກາໝາຍຖິ່ນກຳເນີດແຫ່ງຊາດຂອງຜູ້ດຳເນີນການນັ້ນ;
2. ຍົກເລີກການຈົດທະບຽນຖິ່ນກຳເນີດ ແລະ ຈະຖືວ່າໃບອະນຸຍາດນຳໃຊ້ກາໝາຍຖິ່ນກຳເນີດແຫ່ງຊາດກໍ່ຖືກຍົກເລີກເຊັ່ນດຽວກັນ.

**ມາດຕາ 29 ອາຍຸການນຳໃຊ້ກາໝາຍຖິ່ນກຳເນີດແຫ່ງຊາດ**

ການອະນຸຍາດໃຫ້ນຳໃຊ້ກາໝາຍຖິ່ນກຳເນີດແຫ່ງຊາດ ມີອາຍຸຕະຫຼອດໄລຍະເວລາ ທີ່ສະມາຄົມສົ່ງເສີມສິນຄ້າຖິ່ນກຳເນີດປະຕິບັດຕາມຂໍ້ກຳນົດທີ່ໄດ້ລະບຸໄວ້ ໃນສຳນວນເອກະສານຄຸນລັກສະນະສິນຄ້າຖິ່ນກຳເນີດ ພາຍໃຕ້ກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ແລະ ຂໍ້ຕົກລົງສະບັບນີ້.

ກົມຊັບສິນທາງປັນຍາ ຕ້ອງຍົກເລີກໃບອະນຸຍາດນຳໃຊ້ກາໝາຍຖິ່ນກຳເນີດແຫ່ງຊາດ ຖ້າຫາກ ສະມາຄົມສົ່ງເສີມສິນຄ້າຖິ່ນກຳເນີດບໍ່ປະຕິບັດຕາມຂໍ້ກຳນົດດັ່ງກ່າວ.

## ໝວດທີ 6
## ສະມາຄົມສົ່ງເສີມສິນຄ້າຖິ່ນກຳເນີດ ແລະ ອົງການກວດສອບຄຸນລັກສະນະຖິ່ນກຳເນີດ

**ມາດຕາ 30 ສະມາຄົມສົ່ງເສີມສິນຄ້າຖິ່ນກຳເນີດ**

ສະມາຄົມສົ່ງເສີມສິນຄ້າຖິ່ນກຳເນີດ ແມ່ນການເຕົ້າໂຮມກັນຂອງບັນດານິຕິບຸກຄົນ ແລະ ການຈັດຕັ້ງທາງສັງຄົມ ທີ່ມີສະມາຊິກ, ໄດ້ຮັບການສ້າງຕັ້ງຂຶ້ນຢ່າງເປັນທາງການແລ້ວ ແລະ ມີການເຄື່ອນໄຫວທີ່ກ່ຽວຂ້ອງກັບສິນຄ້າຖິ່ນກຳເນີດ, ມີຄວາມສະໝັກໃຈ ແລະ ເຫັນດີເຫັນພ້ອມນຳກັນ ເພື່ອສະເໜີອົງການຈັດຕັ້ງຂອງລັດ ທີ່ກ່ຽວຂ້ອງສ້າງຕັ້ງຂຶ້ນ;

**ມາດຕາ 31 ສິດ ແລະ ໜ້າທີ່ຂອງສະມາຄົມສົ່ງເສີມສິນຄ້າຖິ່ນກຳເນີດ**

ສະມາຄົມສົ່ງເສີມສິນຄ້າຖິ່ນກຳເນີດທີ່ໄດ້ຈົດທະບຽນ ເປັນຜູ້ຕາງໜ້າ ໃນການປົກປ້ອງສິດ ແລະ ຜົນປະໂຫຍດ ໃຫ້ແກ່ສະມາຊິກຂອງຕົນ .

ສະມາຄົມສົ່ງເສີມສິນຄ້າຖິ່ນກຳເນີດມີສິດ ແລະ ໜ້າທີ່ດັ່ງນີ້:

1. ເຄື່ອນໄຫວວຽກງານຕ່າງໆ ຕາມທີ່ກຳນົດໄວ້ໃນກົດໝາຍ ວ່າດ້ວຍຊັບສິນທາງປັນຍາ, ຂໍ້ຕົກລົງສະບັບນີ້ ແລະ ກົດລະບຽບຂອງຕົນ;
2. ປະສານສົມທົບກ່ຽວກັບວຽກງານຖິ່ນກຳເນີດກັບ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ແລະ ກະຊວງທີ່ກ່ຽວຂ້ອງ, ພະແນກວິທະຍາສາດ ແລະ ເຕັກໂນໂລຊີ ແລະ ພະແນກ ການທີ່ກ່ຽວຂ້ອງຂອງແຂວງ, ນະຄອນຫຼວງ ແລະ ເມືອງ;
3. ລະດົມຂົນຂວາຍ ແລະ ຮັບເອົາການສະໜັບສະໜູນ, ຊ່ວຍເຫຼືອຈາກພາຍໃນ ແລະ ຕ່າງປະເທດເພື່ອພັດທະນາສິນຄ້າຖິ່ນກຳເນີດ;

4. ພິຈາລະນາຮັບເອົາສະມາຊິກ ຫຼື ປົດສະມາຊິກອອກຈາກສະມາຄົມ;
5. ຮັບປະກັນຕໍ່ຄຸນນະພາບ, ຊື່ສຽງ ແລະ ຄວາມດັ້ງເດີມຂອງສິນຄ້າຖິ່ນກຳເນີດຂອງຕົນທີ່ຖືກຍອມຮັບຈາກຕະຫຼາດດ້ວຍການຕິດຕາມການນຳໃຊ້ຊື່ຂອງສິນຄ້າຖິ່ນກຳເນີດໃນທາງການຄ້າ ແລະ ໃນກໍລະນີເກີດມີຂໍ້ຜິດພາດໃດໜຶ່ງ ຕ້ອງແຈ້ງໃຫ້ກົມຊາບ;
6. ຮັບປະກັນໃຫ້ສິນຄ້າຖິ່ນກຳເນີດຂອງຕົນໄດ້ຮັບການປົກປ້ອງຕາມກົດໝາຍ;
7. ສ້າງຂໍ້ມູນ ແລະ ກິດຈະກຳການໂຄສະນາໂດຍມີເປົ້າໝາຍ ເພື່ອສື່ສານ ແລະ ປະຊາສຳພັນໃຫ້ຜູ້ບໍລິໂພກຮັບຮູ້ເຖິງຄຸນລັກສະນະພິເສດຂອງສິນຄ້າຖິ່ນກຳເນີດ ຊຶ່ງເປັນການເພີ່ມມູນຄ່າໃຫ້ແກ່ສິນຄ້າດັ່ງກ່າວ;
8. ຄຸ້ມຄອງ, ຕິດຕາມ, ກວດກາສິນຄ້າຖິ່ນກຳເນີດເພື່ອໃຫ້ມີຄວາມສອດຄ່ອງ ຕາມຂໍ້ກຳນົດທີ່ໄດ້ລະບຸໄວ້ ໃນສຳນວນເອກະສານຄຸນລັກສະນະສິນຄ້າຖິ່ນກຳເນີດ;
9. ປັບປຸງການດຳເນີນງານຂອງສະມາຄົມສົ່ງເສີມສິນຄ້າຖິ່ນກຳເນີດ, ລວມທັງການພັດທະນາຄວາມຊຳນານງານ ແລະ ວາງແຜນຍຸດທະສາດທາງການຄ້າ, ວິເຄາະ, ເຜີຍແຜ່ຂໍ້ມູນດ້ານເສດຖະກິດຂອງສິນຄ້າຖິ່ນກຳເນີດດັ່ງກ່າວ ແລະ ໃຫ້ຄຳແນະນຳແກ່ສະມາຊິກຂອງຕົນ;
10. ພັດທະນາສິນຄ້າ ເພື່ອເພີ່ມມູນຄ່າ ໂດຍນຳໃຊ້ມາດຕະການປົກປ້ອງ ຫຼື ຕອບໂຕ້ຕໍ່ມາດຕະການທີ່ເກີດມີຄວາມສ່ຽງ ຫຼື ສ້າງຄວາມເສຍຫາຍຕໍ່ພາບພົດຂອງສິນຄ້າ;
11. ມີສ່ວນຮ່ວມໃນການປົກປ້ອງ ຊື່ຂອງສິນຄ້າຖິ່ນກຳເນີດ, ການອານຸລັກຮັກສາຄວາມສົມດຸນຂອງລະບົບນິເວດ ແລະ ຄຸນຄ່າຂອງສິນຄ້າຖິ່ນກຳເນີດ ລວມທັງການເກັບກຳຂໍ້ມູນ ແລະ ສະຖິຕິກ່ຽວກັບຕ່ອງໂສ້ມູນຄ່າຂອງສິນຄ້າດັ່ງກ່າວ;
12. ເກັບກຳ ແລະ ຄຸ້ມຄອງ ບັນຊີລາຍຊື່ສະມາຊິກສະມາຄົມສົ່ງເສີມສິນຄ້າຖິ່ນກຳເນີດໃນແຕ່ລະປີແລ້ວລາຍງານໃຫ້ກົມຊັບສິນທາງປັນຍາຊາບ;
13. ອອກໃບອະນຸຍາດນຳໃຊ້ ແລະ ໂຈະການນຳໃຊ້ກາໝາຍຖິ່ນກຳເນີດແຫ່ງຊາດຂອງຜູ້ດຳເນີນການ;
14. ຈັດຕັ້ງປະຕິບັດຕາມຂໍ້ຕົກລົງຂອງກົມຊັບສິນທາງປັນຍາ ທີ່ກ່ຽວຂ້ອງກັບຖິ່ນກຳເນີດ.

ສະມາຄົມສົ່ງເສີມສິນຄ້າຖິ່ນກຳເນີດຕ້ອງລາຍງານກ່ຽວກັບການຈັດຕັ້ງປະຕິບັດໜ້າທີ່ຂອງຕົນໃຫ້ກົມຊັບສິນທາງປັນຍາ ຮັບຊາບຢ່າງເປັນປົກກະຕິ.

ສະມາຄົມສົ່ງເສີມສິນຄ້າຖິ່ນກຳເນີດ ຕ້ອງສ້າງລະບຽບການ ພາຍໃນຂອງຕົນ ເພື່ອອະນຸລັກຄຸນລັກສະນະສະເພາະທາງດ້ານສິ່ງແວດລ້ອມຂອງດິນ ຫຼື ສັດ.

### ມາດຕາ 31 ໜ່ວຍງານກວດສອບຄຸນລັກສະນະສິນຄ້າຖິ່ນກຳເນີດ

ໜ່ວຍງານກວດສອບຄຸນລັກສະນະສິນຄ້າຖິ່ນກຳເນີດ ແມ່ນອົງການທີ່ຢັ້ງຢືນວ່າຜູ້ດຳເນີນການໄດ້ປະຕິບັດຕາມເອກະສານກ່ຽວກັບຄຸນລັກສະນະສິນຄ້າຖິ່ນກຳເນີດ ທີ່ສະມາຄົມໄດ້ວາງອອກ, ໜ່ວຍງານດັ່ງກ່າວ ຕ້ອງໄດ້ຮັບການຈົດທະບຽນຢ່າງຖືກຕ້ອງຕາມກົດໝາຍຂອງ ສປປ ລາວ ຫຼື ເປັນໜ່ວຍງານທີ່ໄດ້ຮັບການອະນຸຍາດ ໃນການປະຕິບັດວຽກກວດສອບ ຫຼື ຢັ້ງຢືນໃນ ສປປ ລາວ ຊຶ່ງອາດເປັນອົງການຂອງລັດ ຫຼື ເອກະຊົນທີ່ມີຄວາມຮັບຜິດຊອບ ແລະ ເປັນທຳໂດຍມີລະບົບກວດສອບທີ່ເຊື່ອຖືໄດ້. ຜູ້ຮ້ອງຂໍມີສິດເລືອກອົງການກວດສອບຄຸນລັກສະນະຖິ່ນກຳເນີດຂອງຕົນ.

ໜ່ວຍງານກວດສອບຄຸນລັກສະນະສິນຄ້າຖິ່ນກຳເນີດ ຕ້ອງຮັບປະກັນວ່າສິນຄ້າທີ່ຜະລິດສອດຄ່ອງກັບເງື່ອນໄຂຕ່າງໆ ທີ່ໄດ້ລະບຸໄວ້ໃນເອກະສານກ່ຽວກັບຄຸນລັກສະນະສິນຄ້າຂອງຖິ່ນກຳເນີດ.

ໜ່ວຍງານກວດສອບຄຸນລັກສະນະສິນຄ້າຖິ່ນກຳເນີດ ຕ້ອງສົ່ງບົດລາຍງານປະຈຳປີໃຫ້ກົມ

ຊັບສິນທາງປັນຍາ ທຸກໆປີ ລວມທັງບັນຊີລາຍຊື່ຜູ້ຜະລິດ, ຜູ້ດຳເນີນການ, ຜະລິດຕະພັນ, ປະລິມານ ແລະ ມາດຕະການ ທີ່ນຳໃຊ້ຖ້າມີ. ກົມຊັບສິນທາງປັນຍາ ຈະຕ້ອງ ກຳນົດວັນທີສົ່ງບົດລາຍງານ ໂດຍອີງຕາມລະດູການເກັບກ່ຽວ ຫຼື ໃນຕອນທ້າຍຂອງປີປະຕິທິນ. ເອກະສານໃດທີ່ບໍ່ເປັນພາສາລາວ ຕ້ອງແປເປັນພາສາລາວພ້ອມທັງມີການຢັ້ງຢືນຄວາມຖືກຕ້ອງຂອງການແປ.

ເພື່ອຢັ້ງຢືນວ່າ ຜູ້ດຳເນີນການໄດ້ປະຕິບັດຕາມເອກະສານກ່ຽວກັບຄຸນລັກສະນະສິນຄ້າຖິ່ນກຳເນີດ ຫຼື ບໍ່ ພາຍຫຼັງການຈົດທະບຽນຖິ່ນກຳເນີດ, ກົມຊັບສິນທາງປັນຍາ ສາມາດເຊີນຜູ້ທີ່ເປັນເຈົ້າຂອງ ຫຼື ບຸກຄົນທີ່ກ່ຽວຂ້ອງເພື່ອໃຫ້ຄຳອະທິບາຍ ຫຼື ຫຼັກຖານທີ່ຊີ້ໃຫ້ເຫັນວ່າຜູ້ດຳເນີນການໄດ້ປະຕິບັດຕາມເອກະສານກ່ຽວກັບຄຸນລັກສະນະສິນຄ້າຖິ່ນກຳເນີດ ຫຼື ບໍ່ ຫຼື ໃນກໍລະນີຈຳເປັນ, ກົມຊັບສິນທາງປັນຍາ ສາມາດຂໍຄຳແນະນຳຈາກຜູ້ຊ່ຽວຊານທີ່ກ່ຽວຂ້ອງເພື່ອເປັນຂໍ້ມູນໃນການພິຈາລະ ນາ ແລະ ຕັດສິນບັນຫາດັ່ງກ່າວ.

ໃນກໍລະນີ ຜູ້ດຳເນີນການຫາກບໍ່ປະຕິບັດຕາມເອກະສານກ່ຽວກັບຄຸນລັກສະນະສິນຄ້າຖິ່ນກຳເນີດ, ອົງການກວດສອບຄຸນລັກສະນະຖິ່ນກຳເນີດຕ້ອງລາຍງານຫາກົມຊັບສິນທາງປັນຍາ ກ່ຽວກັບມາດຕະການ ແລະ ການລົງໂທດທີ່ເໝາະສົມຕໍ່ຜູ້ກ່ຽວດັ່ງນີ້:

1. ໃຫ້ຄຳແນະນຳ;
2. ກ່າວຕັກເຕືອນ;
3. ຍົກເລີກສິດນຳໃຊ້ຖິ່ນກຳເນີດຕໍ່ຊຸດຜະລິດຕະພັນໃດໜຶ່ງ;
4. ໂຈະສິດນຳໃຊ້ຖິ່ນກຳເນີດຊົ່ວຄາວ;
5. ຖອນສິດນຳໃຊ້ຖິ່ນກຳເນີດຢ່າງຖາວອນ;

ສະມາຄົມຖິ່ນກຳເນີດ ຕ້ອງປະຕິບັດຕາມການຕົກລົງຂອງອົງການກວດສອບຄຸນລັກສະນະຖິ່ນກຳເນີດ. ສະມາຄົມຖິ່ນກຳເນີດຕ້ອງລາຍງານກ່ຽວກັບການຈັດຕັ້ງປະຕິບັດມາດຕະການຕ່າງໆໃຫ້ກົມຊັບສິນທາງປັນຍາ ຮັບຊາບ.

## ໝວດທີ 7
## ການເປັນຜູ້ຕາງໜ້າໃນການຈົດທະບຽນຖິ່ນກຳເນີດ ແລະ ດຳເນີນການອື່ນໆ

### ມາດຕາ 32 ບຸກຄົນທີ່ມີສິດເປັນຜູ້ຕາງໜ້າໃນການຈົດທະບຽນຖິ່ນກຳເນີດ ແລະ ດຳເນີນການອື່ນໆ

ບຸກຄົນທີ່ມີສິດຕາງໜ້າໃຫ້ແກ່ຜູ້ທີ່ມີສິດໄດ້ຮັບການປົກປ້ອງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 4 ຂອງຂໍ້ຕົກລົງສະບັບນີ້ ເພື່ອດຳເນີນການຈົດທະບຽນ ແລະ ດຳເນີນການອື່ນໆມີດັ່ງນີ້:

1. ທະນາຍຄວາມທີ່ໄດ້ຮັບອະນຸຍາດ ໃຫ້ດຳເນີນການທາງດ້ານກົດໝາຍໃນ ສປປ ລາວ;
2. ຜູ້ປະກອບການທາງດ້ານຊັບສິນທາງປັນຍາ;
3. ຜູ້ຕາງໜ້າ ຫຼື ພະນັກງານຂອງນິຕິບຸກຄົນ ຫຼື ການຈັດຕັ້ງ;
4. ບຸກຄົນທົ່ວໄປທີ່ຜູ້ຮ້ອງຂໍວ່າຈ້າງ.

ສຳລັບຜູ້ຮ້ອງຂໍຈົດທະບຽນຕ່າງປະເທດ ຕ້ອງຍື່ນຄຳຮ້ອງຂໍຈົດທະບຽນຖິ່ນກຳເນີດ ຜ່ານຜູ້ປະກອບການທາງດ້ານຊັບສິນທາງປັນຍາ ຫຼື ທະນາຍຄວາມທີ່ໄດ້ຮັບອະນຸຍາດໃຫ້ດຳເນີນການທາງດ້ານກົດໝາຍໃນ ສປປ ລາວ ເທົ່ານັ້ນ.

ບຸກຄົນທີ່ມີສິດເປັນຜູ້ຕາງໜ້າ ຕ້ອງມີຄວາມຮູ້ດ້ານຊັບສິນທາງປັນຍາ ແລະ ມີທີ່ຢູ່ ຢູ່ ສປປ ລາວ ແລະ ຕ້ອງໄດ້ ຮັບອະນຸຍາດ ຫຼື ຮັບຮອງ ຈາກກົມຊັບສິນທາງປັນຍາ.

ສຳລັບເງື່ອນໄຂລະອຽດ ແມ່ນກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 33 ການແຕ່ງຕັ້ງຜູ້ຕາງໜ້າ**

ຜູ້ຕາງໜ້າຕ້ອງແມ່ນ ບຸກຄົນທີ່ໄດ້ຮັບການແຕ່ງຕັ້ງຕາມໃບມອບສິດທີ່ມີລາຍເຊັນຂອງຜູ້ຮ້ອງຂໍ ຫຼື ຜູ້ມອບສິດ.

ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 32 ຂອງຂໍ້ຕົກລົງສະບັບນີ້ ແລະ ການກຳນົດອື່ນໃນໝວດນີ້, ໃບມອບສິດສາມາດແຕ່ງຕັ້ງຜູ້ຕາງໜ້າໄດ້ຫຼາຍຄົນ ໂດຍທີ່ຜູ້ຕາງໜ້າທັງໝົດດັ່ງກ່າວມີທີ່ຢູ່ບ່ອນດຽວກັນ.

**ມາດຕາ 34 ການມອບສິດ**

ການມອບສິດ ໝາຍເຖິງ ໃບມອບສິດທີ່ເຈົ້າຂອງສິດໄດ້ມອບໝາຍໃຫ້ບຸກຄົນໜຶ່ງ ຫຼື ຫຼາຍຄົນ ປະຕິບັດໜ້າທີ່ແທນຕົນ.

ໃບມອບສິດ ຕ້ອງກຳນົດ:

1. ລັກສະນະສະເພາະ ແລະ ຂອບເຂດຂອງການເປັນຜູ້ຕາງໜ້າ;
2. ສິດທີ່ຖືກມອບໝາຍໃນການດຳເນີນການໃດໜຶ່ງທີ່ກ່ຽວຂ້ອງນຳກົມຊັບສິນທາງປັນຍາ;
3. ໄລຍະເວລາ ຖ້າມີ;
4. ການຍົກເລີກໂດຍຜູ້ມອບສິດໄດ້ທຸກເວລາ ໂດຍບໍ່ສົ່ງຜົນກະທົບຕໍ່ສິດຂອງຜູ້ຕາງໜ້າໃນການໄດ້ຮັບຄ່າຕອບແທນຈາກການບໍລິການ ແລະ ຄ່າໃຊ້ຈ່າຍຕ່າງໆທີ່ເກີດຂຶ້ນໃນລະຫວ່າງການຕິດຕໍ່ພົວພັນກັບກົມຊັບສິນທາງປັນຍາ.

ກົມຊັບສິນທາງປັນຍາ ຈະຮັບຮູ້ເງື່ອນໄຂທີ່ໄດ້ກຳນົດໄວ້ໃນໃບມອບສິດ, ເວັ້ນເສຍແຕ່ເງື່ອນໄຂຂອງໃບມອບສິດຫາກຂັດກັບກົດໝາຍ ຫຼື ລະບຽບການ.

ກົມຊັບສິນທາງປັນຍາຕ້ອງຖືວ່າໃບມອບສິດ ນຳໃຊ້ສະເພາະຄຳຮ້ອງດຽວເທົ່ານັ້ນ ຖ້າໃບມອບສິດຫາກບໍ່ໄດ້ກຳນົດ ຂອບເຂດ ຫຼື ໄລຍະເວລາ ຂອງການເປັນຜູ້ຕາງໜ້າ ຫຼື ການດຳເນີນການອື່ນທີ່ກ່ຽວຂ້ອງກັບໃບມອບສິດດັ່ງກ່າວ ແລະ ອາຍຸຂອງໃບມອບສິດຈະຖືວ່າສິ້ນສຸດລົງໃນເມື່ອທຸກບັນຫາທີ່ກ່ຽວຂ້ອງກັບຄຳຮ້ອງດັ່ງກ່າວ ຫຼື ການດຳເນີນການອື່ນຫາກສຳເລັດແລ້ວ.

ການມອບສິດທີ່ມີຜົນບັງຄັບໃຊ້ຕ້ອງເຮັດເປັນລາຍລັກອັກສອນ ແລະ ມີລາຍເຊັນຂອງຜູ້ມອບສິດ. ໃນກໍລະນີ ຜູ້ອອກໃບມອບສິດເປັນ ນິຕິບຸກຄົນ ຫຼື ການຈັດຕັ້ງ, ໃບມອບສິດຕ້ອງໄດ້ລົງລາຍເຊັນໂດຍຜູ້ມີສິດອຳນາດຂອງນິຕິບຸກຄົນ ຫຼື ການຈັດຕັ້ງດັ່ງກ່າວ.

**ມາດຕາ 35 ການສິ້ນສຸດການເປັນຜູ້ຕາງໜ້າ**

ການເປັນຜູ້ຕາງໜ້າຈະສິ້ນສຸດລົງໃນກໍລະນີການມອບສິດຖືກຍົກເລີກໂດຍຜູ້ມອບສິດ ຫຼື ຜູ້ຕາງໜ້າ ຖອນຕົວ. ໃນກໍລະນີ ຜູ້ຕາງໜ້າໄດ້ຖອນຕົວຕ້ອງແຈ້ງໃຫ້ກົມຊັບສິນທາງປັນຍາ ແລະ ຜູ້ມອບອຳນາດຮັບຊາບ.

## ໝວດທີ 8
## ການທົບທວນຄືນທາງດ້ານບໍລິຫານກ່ຽວກັບການຈົດທະບຽນຖິ່ນກຳເນີດ

**ມາດຕາ 36 ການທົບທວນຄືນ ແລະ ການແກ້ໄຂ ຂໍ້ຜິດພາດ**

ກົມຊັບສິນທາງປັນຍາ ມີສິດທົບທວນຄືນການຈົດທະບຽນຖິ່ນກຳເນີດ ເພື່ອດຳເນີນການທາງດ້ານບໍລິຫານຕາມຄວາມຈຳເປັນ ເພື່ອປ້ອງກັນ ແລະ ການແກ້ໄຂ ຂໍ້ຜິດພາດ.

**ມາດຕາ 37 ການທົບທວນຄືນດ້ານບໍລິຫານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ສາມາດສະເໜີຂໍໃຫ້ກົມຊັບສິນທາງປັນຍາທົບທວນຄືນ ທີ່ເຫັນວ່າການດໍາເນີນການກ່ຽວກັບການຈົດທະບຽນຖິ່ນກໍາເນີດຂອງຕົນມີຂໍ້ຜິດພາດ ຫຼື ບໍ່ປະຕິບັດຕາມເງື່ອນໄຂທີ່ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ ພາຍໃນເວລາ 90 ວັນພາຍຫຼັງມື້ອອກແຈ້ງການ ຕາມກໍລະນີ ດັ່ງນີ້:

1. ສະເໜີຂໍດັດແກ້ ຂໍ້ຜິດພາດດັ່ງກ່າວໃຫ້ກົມຊັບສິນທາງປັນຍາ ໂດຍບໍ່ຈ່າຍຄ່າບໍລິການ;
2. ສະເໜີຂໍດັດແກ້ ຂໍ້ຜິດພາດ ທີ່ເກີດຈາກຜູ້ຮ້ອງຂໍ ແລະ ຈ່າຍຄ່າບໍລິການ;
3. ສະເໜີຂໍໃຫ້ພິຈາລະນາຄືນໃໝ່ ຊຶ່ງຕ້ອງປະກອບມີຂໍ້ມູນດັ່ງນີ້:
   - 3.1 ເງື່ອນໄຂ ຫຼື ການຕົກລົງ ທີ່ຕ້ອງການໃຫ້ທົບທວນຄືນ;
   - 3.2 ຂໍ້ເທັດຈິງ ແລະ ພື້ນຖານທາງດ້ານກົດໝາຍ;
   - 3.3 ມາດຕະການທີ່ສະເໜີໃຫ້ກົມຊັບສິນທາງປັນຍາພິຈາລະນາ.

ການສະເໜີຍັງອາດຈະລວມເອົາຄໍາຊີ້ແຈງ ຫຼື ການອະທິບາຍຊຶ່ງຜູ້ສະເໜີເຫັນວ່າຈະເປັນການສະໜັບສະໜູນໃຫ້ແກ່ການພິຈາລະນາຄືນໃໝ່ ໂດຍບໍ່ຈ່າຍຄ່າບໍລິການ.

**ມາດຕາ 38 ການສະເໜີໃຫ້ຢຸດຊົ່ວຄາວ**

ການສະເໜີໃຫ້ທົບທວນທາງດ້ານບໍລິຫານ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 39 ຂອງຂໍ້ຕົກລົງສະບັບນີ້ ອາດລວມເຖິງການສະເໜີໃຫ້ຢຸດຊົ່ວຄາວການປະຕິບັດເງື່ອນໄຂ ຫຼື ການຕົກລົງຂອງກົມຊັບສິນທາງປັນຍາ ທີ່ຜູ້ສະເໜີຂໍໃຫ້ພິຈາລະນາຄືນໃໝ່ ເພື່ອຄວາມຍຸຕິທໍາ ໂດຍຄໍານຶງເຖິງຜົນປະໂຫຍດຂອງບຸກຄົນທີສາມ.

**ມາດຕາ 39 ການພິຈາລະນາຄືນໃໝ່**

ກົມຊັບສິນທາງປັນຍາຕ້ອງຮັບການສະເໜີ ທີ່ໃຫ້ພິຈາລະນາຄືນໃໝ່ ກ່ຽວກັບການຈົດທະບຽນຖິ່ນກໍາເນີດ ຊຶ່ງຜູ້ສະເໜີຕ້ອງມີເຫດຜົນທີ່ພຽງພໍໃນການສະເໜີໃຫ້ທົບທວນ ເງື່ອນໄຂ ຫຼື ການຕົກລົງ ທີ່ຕົນເຫັນວ່າ ບໍ່ສອດຄ່ອງຕາມລະບຽບການ ກ່ຽວກັບການຈົດທະບຽນຖິ່ນກໍາເນີດ. ສໍາລັບຂັ້ນຕອນການພິຈາລະນາຄືນໃໝ່ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

ຜູ້ສະເໜີ ສາມາດອຸທອນໄປຍັງຄະນະກໍາມະການອຸທອນຂອງກົມ ພາຍໃນ 30 ວັນ ນັບແຕ່ວັນອອກແຈ້ງການກ່ຽວກັບຜົນການພິຈາລະນາດັ່ງກ່າວເປັນຕົ້ນໄປ ຖ້າຫາກບໍ່ພໍໃຈຕໍ່ຜົນການພິຈາລະນາຄືນໃໝ່.

ຜູ້ສະເໜີສາມາດຂໍອຸທອນໄປຫາສານ ຫາກບໍ່ພໍໃຈຕໍ່ຜົນການພິຈາລະນາຂອງກົມຊັບສິນທາງປັນຍາ.

**ມາດຕາ 40 ການຂໍອຸທອນ**

ການອຸທອນ ແລະ ການດໍາເນີນການ ທີ່ໄດ້ກໍານົດໄວ້ໃນມາດຕານີ້ແມ່ນຂັ້ນຕອນທາງດ້ານບໍລິຫານຂອງກົມຊັບສິນທາງປັນຍາ.

ນິຕິບຸກຄົນ, ການຈັດຕັ້ງ ທີ່ດໍາເນີນການນໍາກົມຊັບສິນທາງປັນຍາ ກ່ຽວກັບການຈົດທະບຽນຖິ່ນກໍາເນີດ ມີສິດຂໍອຸທອນ ຫຼື ສະເໜີຄໍາຄັດຄ້ານໄປຍັງຄະນະກໍາມະການອຸທອນຂອງກົມຊັບສິນທາງປັນຍາ ເພື່ອພິຈາລະນາ ຖ້າຫາກບໍ່ເຫັນດີນໍາການກໍານົດເງື່ອນໄຂ ຫຼື ການຕົກລົງຂອງກົມຊັບສິນທາງປັນຍາ ໂດຍເສຍຄ່າທໍານຽມ ແລະ ຄ່າບໍລິການ.

ພະນັກງານຂອງກົມຊັບສິນທາງປັນຍາ ທີ່ມີສ່ວນຮ່ວມໃນການອະນຸຍາດ, ການຢັ້ງຢືນ, ການປະຕິເສດ ຫຼື ການກໍານົດເງື່ອນໄຂ ຫຼື ການຕົກລົງຂອງຕົນທີ່ຖືກຂໍອຸທອນ ຕ້ອງໃຫ້ຄໍາຊີ້ແຈງ

ກ່ຽວກັບພື້ນຖານທາງດ້ານກົດໝາຍ ແລະ ຂໍ້ເທັດຈິງໃນການຕົກລົງດັ່ງກ່າວ ເພື່ອເປັນຂໍ້ມູນໃຫ້ແກ່ຄະນະກໍາມະການອຸທອນ.

ຄະນະກໍາມະການອຸທອນ ສາມາດເຊີນຜູ້ຊ່ຽວຊານສະເພາະດ້ານມາໃຫ້ຄໍາປຶກສາ. ຄະນະກໍາມະການອຸທອນ ຕ້ອງດໍາເນີນການພິຈາລະນາ ໂດຍອີງໃສ່ການຕົກລົງທີ່ໄດ້ດໍາເນີນຕາມມາດຕານີ້ ແລະ ຕ້ອງບັນທຶກການຕົກລົງເປັນລາຍລັກອັກສອນ. ການຕົກລົງ ຕ້ອງເຮັດເປັນປຶ້ມບັນທຶກຂອງຄະນະກໍາມະການອຸທອນ ໂດຍລະບຸພື້ນຖານທາງດ້ານກົດໝາຍ ແລະ ຂໍ້ເທັດຈິງທີ່ກ່ຽວຂ້ອງ. ປຶ້ມບັນທຶກການຕົກລົງດັ່ງກ່າວ ຕ້ອງສົ່ງໃຫ້ຜູ້ສະເໜີຂໍອຸທອນຊາບ.

ການຂໍອຸທອນດັ່ງກ່າວຖືວ່າເປັນໂມຄະ ໃນກໍລະນີທີ່ຜູ້ສະເໜີຂໍອຸທອນ ບໍ່ສາມາດສະໜອງຂໍ້ມູນທີ່ຈໍາເປັນ ຕາມທີ່ກໍານົດໄວ້ໃນຂໍ້ 3 ມາດຕາ 37 ຂອງຂໍ້ຕົກລົງສະບັບນີ້.

ຄະນະກໍາມະການອຸທອນ ຕ້ອງສົ່ງສໍານວນຄໍາຮ້ອງຂໍອຸທອນພ້ອມດ້ວຍປຶ້ມບັນທຶກການຕົກລົງຂອງຕົນ ໃຫ້ກົມຊັບສິນທາງປັນຍາ ເພື່ອດໍາເນີນການຂັ້ນຕໍ່ໄປ.

ຄູ່ກໍລະນີສາມາດຂໍອຸທອນຕໍ່ສານປະຊາຊົນ ຖ້າຫາກບໍ່ພໍໃຈຕໍ່ຜົນການພິຈາລະນາຂອງຄະນະກໍາມະການອຸທອນຂອງກົມຊັບສິນທາງປັນຍາ.

ສໍາລັບຂັ້ນຕອນການດໍາເນີນການອຸທອນ ກ່ຽວກັບ ການຄັດຄ້ານຄໍາຮ້ອງຂໍຈົດທະບຽນຖິ່ນກໍາເນີດ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 41 ຄະນະກໍາມະການອຸທອນ**

ກົມຊັບສິນທາງປັນຍາ ຕ້ອງສ້າງຕັ້ງຄະນະກໍາມະການອຸທອນຂອງຕົນ ເພື່ອດໍາເນີນການແກ້ໄຂການຂໍອຸທອນກ່ຽວກັບ ການຢັ້ງຢືນ, ການປະຕິເສດ ຫຼື ການກໍານົດເງື່ອນໄຂ ຫຼື ການຕົກລົງຂອງກົມຊັບສິນທາງປັນຍາ. ຄະນະກໍາມະການອຸທອນຕ້ອງເປັນເອກະລາດ ຊຶ່ງສາມາດສ້າງຕັ້ງຂຶ້ນແບບຖາວອນ ຫຼື ຊົ່ວຄາວ ກໍໄດ້.

ບຸກຄົນທີ່ມີສ່ວນຮ່ວມໃນ ການຢັ້ງຢືນ, ການປະຕິເສດ ຫຼື ການກໍານົດເງື່ອນໄຂ ຫຼື ການຕົກລົງ ທີ່ເປັນສາເຫດຂອງການຂໍອຸທອນ ບໍ່ສາມາດເຂົ້າຮ່ວມຢູ່ໃນຄະນະກໍາມະການອຸທອນ.

**ມາດຕາ 42 ສໍານວນເອກະສານ ຫຼື ເອກະສານທີ່ຊອກບໍ່ເຫັນ**

ກົມຊັບສິນທາງປັນຍາຕ້ອງສ້າງສໍາເນົາສໍານວນເອກະສານ ຫຼື ເອກະສານອື່ນໆ ທີ່ເສຍນັ້ນຂຶ້ນໃໝ່ ຖ້າສໍານວນເອກະສານ ຫຼື ເອກະສານອື່ນໆ ທີ່ພົວພັນເຖິງຄໍາຮ້ອງ ຫຼື ການດໍາເນີນການອື່ນໆ ຫາກເສຍ ຫຼື ຊອກບໍ່ເຫັນ. ກົມຊັບສິນທາງປັນຍາຕ້ອງສະເໜີໃຫ້ ຜູ້ຍື່ນຄໍາຮ້ອງ ຫຼື ເຈົ້າຂອງເອກະສານ ສົ່ງສໍາເນົາເອກະສານທີ່ກ່ຽວຂ້ອງ ຫຼື ເອກະສານທີ່ໄດ້ຕິດຕໍ່ພົວພັນກັບກົມຊັບສິນທາງປັນຍາ ພ້ອມທັງຢັ້ງຢືນຄວາມຖືກຕ້ອງ ແລະ ຄົບຖ້ວນ ຂອງສໍາເນົາດັ່ງກ່າວ ລວມທັງ ເອກະສານ ຫຼື ສ□ານວນເອກະສານທີ່ກ່ຽວຂ້ອງ ທີ່ໄດ້ຕິດຕໍ່ພົວພັນກັບກົມຊັບສິນທາງປັນຍາ ທີ່ບໍ່ມີການບັນທຶກໄວ້ ແຕ່ຜູ້ຮ້ອງຂໍ ຫຼື ເຈົ້າຂອງນັ້ນຮັບຮູ້.

## ໝວດທີ 9
## ອົງການຄຸ້ມຄອງວຽກງານຖິ່ນກຳເນີດ

**ມາດຕາ 43 ອົງການຄຸ້ມຄອງ**

ກົມຊັບສິນທາງປັນຍາ, ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ເປັນຜູ້ຮັບຜິດຊອບ ພິຈາລະນາຄຳຮ້ອງຂໍຈົດທະບຽນຖິ່ນກຳເນີດ ແລະ ອອກໃບຢັ້ງຢືນການຈົດທະບຽນຖິ່ນກຳເນີດ ຕາມເງື່ອນໄຂທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍຊັບສິນທາງປັນຍາ ແລະ ຂໍ້ຕົກລົງສະບັບນີ້.

ພະແນກວິທະຍາສາດ ແລະ ເຕັກໂນໂລຊີແຂວງ, ນະຄອນຫຼວງເປັນຜູ້ຮັບຜິດຊອບໃນການຄຸ້ມຄອງ, ຕິດຕາມ ແລະ ກວດກາ ສະມາຄົມສົ່ງເສີມສິນຄ້າຖິ່ນກຳເນີດ ແລະ ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍຂອງກົມຊັບສິນທາງປັນຍາ.

ຫ້ອງການວິທະຍາສາດ ແລະ ເຕັກໂນໂລຊີ ເມືອງ, ນະຄອນ ແມ່ນປະຕິບັດຕາມການມອບໝາຍຂອງພະແນກວິທະຍາສາດ ແລະ ເຕັກໂນໂລຊີ ແຂວງ, ນະຄອນຫຼວງ.

**ມາດຕາ 44 ສິດ ແລະ ໜ້າທີ່ຂອງກົມຊັບສິນທາງປັນຍາ**

ກົມຊັບສິນທາງປັນຍາມີສິດ ແລະ ໜ້າທີ່ດັ່ງນີ້:

1. ເຜີຍແຜ່ຂໍ້ຕົກລົງ, ອອກຄຳແນະນຳ, ແຈ້ງການກ່ຽວກັບຖິ່ນກຳເນີດ;
2. ຄົ້ນຄ້ວາ ແລະ ນຳສະເໜີກະຊວງ ເພື່ອອອກນິຕິກຳ ແລະ ລະບຽບການຕ່າງໆ ໃນການຄຸ້ມຄອງ ແລະ ປົກປ້ອງເຄື່ອງໝາຍການຄ້າ;
3. ຮັບ ແລະ ພິຈາລະນາສຳນວນຄຳຮ້ອງຂໍຈົດທະບຽນ, ການບັນທຶກການປ່ຽນຊື່ ແລະ/ຫຼືທີ່ຢູ່ , ການອະນຸຍາດນຳໃຊ້ ແລະ ການສະເໜີອື່ນໆ ກ່ຽວກັບຖິ່ນກຳເນີດ;
4. ບັນທຶກ ແລະ ເກັບຮັກສາຂໍ້ມູນ ກ່ຽວກັບ ຖິ່ນກຳເນີດ;
5. ຈົດທະບຽນ, ແຈ້ງປະຕິເສດ, ຍົກເລີກ ແລະ ອື່ນໆ ກ່ຽວກັບການຈົດທະບຽນຖິ່ນກຳເນີດ;
6. ຄົ້ນຄວ້າ ແລະ ພິຈາລະນາຄຳສະເໜີ ຂໍຄັດຄ້ານຄຳຮ້ອງຂໍຈົດທະບຽນຖິ່ນກຳເນີດ;
7. ຄົ້ນຄວ້າ ແລະ ພິຈາລະນາ ຄຳສະເໜີໃຫ້ທົບທວນຄືນທາງດ້ານບໍລິຫານ ທີ່ກ່ຽວຂ້ອງກັບການຈົດທະບຽນຖິ່ນກຳເນີດ;
8. ຄົ້ນຄວ້າ ແລະ ພິຈາລະນາຄຳສະເໜີຂໍອຸທອນ ກ່ຽວກັບການຈົດທະບຽນຖິ່ນກຳເນີດ;
9. ຊຸກຍູ້ ແລະ ສົ່ງເສີມວຽກງານການຈົດທະບຽນຖິ່ນກຳເນີດ;
10. ຄຸ້ມຄອງສະມາຄົມສົ່ງເສີມສິນຄ້າຖິ່ນກຳເນີດ;
11. ຄຸ້ມຄອງກາໝາຍຖິ່ນກຳເນີດແຫ່ງຊາດ;
12. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍຂອງກະຊວງວິທະຍາສາດ ແລະ ເຕັກໂນໂລຊີ.

**ມາດຕາ 45 ສິດ ແລະ ໜ້າທີ່ຂອງພະແນກວິທະຍາສາດ ແລະ ເຕັກໂນໂລຊີແຂວງ, ນະຄອນຫຼວງ**

ພະແນກວິທະຍາສາດແລະເຕັກໂນໂລຊີແຂວງ, ນະຄອນຫຼວງມີສິດ ແລະ ໜ້າທີ່ດັ່ງນີ້:

1. ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ຊຸກຍູ້ສົ່ງເສີມສະມາຄົມສິນຄ້າຖິ່ນກຳເນີດ;
2. ປະສານງານກັບພະແນກການທີ່ກ່ຽວຂ້ອງ;
3. ປະຕິບັດສິດ ແລະ ໜ້າທີ່ອື່ນໆຕາມການມອບໝາຍຂອງກົມຊັບສິນທາງປັນຍາ.

## ໝວດທີ 10
## ບົດບັນຍັດສຸດທ້າຍ

**ມາດຕາ 46 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມຊັບສິນທາງປັນຍາ ແລະ ພະແນກວິທະຍາສາດ ແລະ ເຕັກໂນໂລຊີ ແຂວງ, ນະຄອນຫຼວງ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 47 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

ຂໍ້ກຳນົດ ແລະ ຂໍ້ຕົກລົງໃດ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ລັດຖະມົນຕີ**